

# ປະຕິບັດດ້ວຍຄວາມຊື່ສັດສຸດຈະລິດ

## ການຄຸ້ມຄອງການປະຕິບັດທາງທຸລະກິດຂອງ Celestica

Celestica™

# ຄ່ານິຍົມ

## ເຮັດວຽກເປັນໝູ່ຄະນະ

ພວກເຮົາເຂົ້າໃຈ, ຮຽນຮູ້ ແລະ ເຮັດວຽກຮ່ວມກັນ ເພື່ອສ້າງອະນາຄົດທີ່ຍິ່ງໃຫຍ່.

## ການມີຫົວຄິດປະດິດສ້າງ

ພວກເຮົາສ້າງມາດຕະຖານສຳລັບຄວາມຄິດສ້າງສັນ, ນະວັດຕະກຳໃໝ່ ແລະ ຜົນໄດ້ຮັບ.

## ຄວາມໝັ້ນໃຈ

ພວກເຮົາຊອກວິທີແກ້ໄຂບັນຫາ ແລະ ພາກພູມໃຈກັບຜົນງານທີ່ສົ່ງມອບອອກໄປ.

## ການເອົາໃຈໃສ່

ພວກເຮົາແມ່ນຄູ່ຮ່ວມງານທີ່ໜ້າເຊື່ອຖືຊຶ່ງຂັບເຄື່ອນດ້ວຍຄວາມຮັບຜິດຊອບ, ຄວາມຊື່ສັດ ແລະ ຄວາມເຄົາລົບ ນອບນ້ອມ.

# ສາລະບານ


ສານຈາກທ່ານ Rob Mionis 1

ການຄຸ້ມຄອງການປະຕິບັດທາງທຸລະກິດ (BCG) 2

## ປະພຶດຕົນຢ່າງມີຈັນຍາບັນ 3

ການບັນທຶກ ແລະ ການລາຍງານທາງດ້ານການເງິນ 4

ນະໂຍບາຍ Celestica ວ່າດ້ວຍການເລືອກປະຕິບັດ, ການຖຸກຖາມ
ແລະ ການໃຊ້ສານເສບຕິດ 5

ຕົ້ນໄມ້ການຕັດສິນໃຈດ້ານຈັນຍາບັນ 6

## ການດຳເນີນທຸລະກິດຂອງພວກເຮົາ ແລະ ການປະກອບສ່ວນພັດທະນາຊຸມຊົນຂອງພວກເຮົາ 7

ການຈັດການຢ່າງເປັນທຳ – ລູກຄ້າ ແລະ ຜູ້ສະໜອງສິນຄ້າ 7

ນະໂຍບາຍ Celestica ວ່າດ້ວຍສິນບົນ ແລະ ຂອງຂວັນ 8

ການເຂົ້າໃຈ ກ່ຽວກັບ ສິນບົນໃນອົງການ 9

ການຫຼີກລ້ຽງການຂັດແຍ້ງຜົນປະໂຫຍດ 10

ຊື່ສຽງຂອງ Celestica ໃນນາມເປັນພົນລະເມືອງທີ່ດີ 11

## ການປົກປ້ອງຊັບສິນຂອງພວກເຮົາ 12

ການໃຊ້ຊັບສິນຂອງ Celestica ທີ່ຍອມຮັບໄດ້ 12

ການຮັກສາຄວາມລັບ ແລະ ຄວາມເປັນສ່ວນຕົວດ້ານຂໍ້ມູນ 13

## ການປະຕິບັດຕາມກົດໝາຍ, ຄວາມຮັບຜິດຊອບ ແລະ ການລະເມີດຂອງບຸກຄົນ 14

ການຊື້ຂາຍຂອງຄົນວົງໃນ 14

ການປະຕິບັດຕາມລະບຽບການຄ້າ 15

## ການເປີດເຜີຍ ຫຼືການຂໍຄວາມຊ່ວຍເຫຼືອ 16

ວິທີລາຍງານການລະເມີດ 16



ສານຈາກ

# Rob Mionis

ເຖິງ ບັນດາເພື່ອນຮ່ວມງານ,

ຢູ່ທີ່ Celestica, ຊື່ສຽງຄືຊັບສິນມີຄ່າທີ່ສຸດຂອງພວກເຮົາ, ຊຶ່ງແກ່ນແທ້ຂອງຊື່ສຽງຫຼັກໆທີ່ພວກເຮົາໄດ້ມາ ແມ່ນພະນັກງານ ຂອງພວກເຮົາ ໃນ ທົ່ວໂລກ ຜູ້ທີ່ຍຶດຖືໃນຄ່ານິຍົມຫຼັກຂອງການເຮັດວຽກເປັນໝູ່ຄະນະ, ການມີຫົວຄິດປະດິດສ້າງ, ຄວາມໝັ້ນໃຈ ແລະ ການເອົາໃຈໃສ່.

ຂ້າພະເຈົ້າຢາກໃຫ້ພະນັກງານທຸກຄົນ ເຮັດວຽກ ໃຫ້ແກ່ບໍລິສັດ ດ້ວຍຄວາມພູມໃຈ ທີ່ມີຄວາມມຸ່ງໝັ້ນ ຮັບປະ ກັນໃຫ້ພະນັກງານທຸກຄົນເຮັດວຽກກັນ, ກັບລູກຄ້າ, ຜູ້ສະໜອງ ສິນຄ້າ, ຄູ່ຮ່ວມມື, ຫຸ້ນສ່ວນ ແລະ ຊຸມຊົນຂອງພວກເຮົາ ດ້ວຍຈັນຍາບັນ ແລະ ຄວາມຮັບຜິດຊອບ.

ເພື່ອບັນລຸເປົ້າໝາຍດັ່ງກ່າວນີ້ ພວກເຮົາໄດ້ປະຕິບັດຕາມຄ່ານິຍົມ ແລະ ຈັນຍາບັນທາງທຸລະກິດ ທີ່ໄດ້ລະບຸໄວ້ຢູ່ ໃນນະໂຍບາຍກ່ຽວກັບການຄຸ້ມຄອງການປະຕິບັດທາງທຸລະກິດ (BCG) ແລະ ຫຼັກຈັນຍາບັນແຫ່ງພັນທະມິດທຸລະກິດຜູ້ມີຄວາມຮັບຜິດຊອບ (RBA). ດ້ວຍນະໂຍບາຍເຫຼົ່ານີ້ ພວກເຮົາໄດ້ສ້າງມາດຕະຖານເພື່ອຮັບປະກັນວ່າທຸກຢ່າງທີ່ພວກເຮົາເຮັດ ນັ້ນ ຖືກຕ້ອງ.

ພວກເຮົາແຕ່ລະຄົນມີພາລະບົດບາດຮັບປະກັນ ຄວາມສົມບູນຂອງອົງການຈັດຕັ້ງນີ້, ມັນແມ່ນຄວາມຮັບຜິດຊອບຂອງພວກເຮົາທີ່ຕ້ອງລາຍງານ ພຶດຕິກຳ ຫຼື ການກະທຳ ທີ່ລະເມີດຕໍ່ມາດຕະຖານດ້ານຈັນຍາບັນພວກເຮົາສະໜັບສະໜູນໃຫ້ພະນັກງານ ລາຍງານໃຫ້ ຜູ້ຈັດການຂອງເຂົາເຈົ້າ ຫຼື ພະແນກບຸກຄະລາກອນ, ຫຼື ອີເມວ compliance@celestica.com, ຖ້າເຂົາເຈົ້າມີຄຳຖາມ ຫຼື ຂໍ້ກັງວົນໃຈ
ກ່ຽວກັບເລື່ອງຈັນຍາບັນ. ນອກນັ້ນ, ພະນັກງານອາດຈະລາຍງານຂໍ້ກັງວົນໃຈຜ່ານ ສາຍດ່ວນ Celestica ໂດຍ ບໍ່ເສຍຄ່າ ຫຼື ເຄື່ອງມືຄວາມປອດໄພໃນເວັບໄຊ.

ຂໍໃຫ້ຈື່ຈຳວ່າ ການເຮັດໜ້າທີ່ດ້ວຍຄວາມຊື່ສັດສຸດຈະລິດ ເພື່ອຮັກສາ Celestica ໃຫ້ເປັນສະຖານທີ່ທີ່ພວກເຮົາທຸກຄົນພູມໃຈ. ດ້ວຍການຮ່ວມມືຂອງທຸກທ່ານ ຂ້າພະເຈົ້າເຊື່ອວ່າ Celestica ຈະສືບຕໍ່ຮັກສາໄດ້ຊື່ສຽງ ກໍ່ຄືຄວາມໄວ້ວາງໃຈຈາກຄູ່ຮ່ວມມື ຕະຫລອດຮອດລູກຄ້າຂອງພວກເຮົາ ແລະ ເປັນອົງກອນພົນລະເມືອງທີ່ມີຈັນຍາບັນ ແລະ ຄວາມຮັບຜິດຊອບ.



ຂອບໃຈຫລາຍໆສຳລັບຄວາມມຸ່ງໝັ້ນຂອງທຸກທ່ານ.

Rob Mionis
ປະທານ ແລະ ຜູ້ບໍລິຫານລະດັບສູງ

# ການຄຸ້ມຄອງການປະຕິບັດທາງທຸລະກິດ (BCG)

Celestica ສ້າງສາຍພົວພັນບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈ ພ້ອມແກ້ໄຂສິ່ງທ້າທາຍທາງເຕັກໂນໂລຊີທີ່ຊັບຊ້ອນ ເພື່ອ ຊ່ວຍລູກຄ້າຂອງພວກເຮົາໃຫ້ເຫັນໄດ້ເຖິງຄຸນຄ່າ, ສັກກະຍະພາບ ແລະ ຜົນໄດ້ຮັບທີ່ຫຼາຍກວ່າ. ເພື່ອປະຕິບັດຕາມຄຳໝັ້ນສັນຍານີ້, ຂ້າພະເຈົ້າຕ້ອງປະພຶດປະຕິບັດດ້ວຍຄວາມຊື່ສັດສຸດຈະລິດ ແລະ ເຮັດວຽກກັບເພື່ອນຮ່ວມງານ, ລູກຄ້າ, ຜູ້ສະໜອງສິນຄ້າ, ຫຸ້ນສ່ວນ, ຜູ້ຖືຫຸ້ນ ແລະ ຊຸມຊົນຂອງຂ້າພະເຈົ້າ ຢ່າງມີຈັນຍາບັນ ແລະ ມີຄວາມຮັບຜິດຊອບ.

ນະໂຍບາຍ BCG ອະທິບາຍເຖິງເຖິງວິທີການດຳເນີນທຸລະກິດ ແລະ ກຳນົດມາດຕະຖານດ້ານຈັນຍາບັນ ແລະ ກົດໝາຍ ທີ່ຂ້າພະເຈົ້າ, ໃນນາມ ເປັນພະນັກງານ
ຂອງ Celestica, ຕ້ອງໄດ້ປະຕິບັດຕາມ. ຄວາມມຸ່ງໝັ້ນນີ້ເປັນຫຼາຍກວ່າ
ແຫຼ່ງຄວາມພາກພູມໃຈ – ມັນແມ່ນສູນລວມແຫ່ງຄວາມເປັນຕົວຕົນ ຂອງພວກເຮົາ.
BCG ກຳນົດນະ ໂຍບາຍຕ່າງໆເພື່ອຊ່ວຍຂ້າພະເຈົ້າດຳເນີນ ຊີວິດຕາມຄວາມຄາດຫວັງເຫຼົ່ານີ້, ໃຫ້ຕົວຢ່າງ ກ່ຽວກັບນະໂຍບາຍດັ່ງກ່າວວ່າໝາຍເຖິງຫຍັງ ແລະ ບອກຂ້າພະເຈົ້າວ່າຕ້ອງຖາມຄຳຖາມເວລາໃດ, ຕ້ອງໄປໃສ ເພື່ອຂໍຄວາມຊ່ວຍເຫຼືອ ແລະ ຍ້ອນຫຍັງການປະພຶດຕາມຈັນຍາບັນ ແລະ ກົດໝາຍຈຶ່ງສຳຄັນ.

ຂ້າພະເຈົ້າເຂົ້າໃຈວ່າ ຖ້າຂ້າພະເຈົ້າລະເມີດ BCG, ຂ້າພະເຈົ້າອາດຈະຖືກ
ປະຕິບັດ
ປະຕິບັດວິໄນເຖິງຂັ້ນຖືກໄລ່ອອກຈາກວຽກ.

# ການປະພຶດຕົນຢ່າງມີຈັນຍາບັນ

ຈັນຍາບັນແມ່ນສ່ວນສຳຄັນຂອງຄ່ານິຍົມຂອງພວກເຮົາຢູ່ທີ່ Celestica. ການດຳເນີນການຢ່າງມີຈັນຍາບັນໝາຍເຖິງການເຮັດສິ່ງທີ່ຖືກຕ້ອງ. ພວກເຮົາທຸກຄົນລ້ວນແຕ່ຕ້ອງການເຮັດໃນສິ່ງທີ່ຖືກຕ້ອງເພື່ອພວກເຮົາເອງ ແລະ Celestica. BCG ຊ່ວຍຊີ້ນຳຂ້າພະເຈົ້າໂດຍການກຳນົດຄວາມຮັບຜິດຊອບຂອງຂ້າພະເຈົ້າທີ່ມີຕໍ່ກັບ Celestica ແລະ ເພື່ອນຮ່ວມງານ, ລູກຄ້າ, ຜູ້ສະໜອງສິນຄ້າ, ລັດຖະບານ ແລະ ຊຸມຊົນ.

## ຂ້າພະເຈົ້າປະຕິບັດຕົນດ້ວຍຄວາມຊື່ສັດສຸດຈະລິດ

ຂ້າພະເຈົ້າຮູ້ວ່າທຸກສິ່ງທຸກຢ່າງທີ່ຂ້າພະເຈົ້າເວົ້າ ແລະ ກະທຳລ້ວນແຕ່ມີຜົນຕໍ່ກັບຊື່ສຽງຂອງຂ້າພະເຈົ້າ - ແລະ ຊື່ສຽງຂອງ Celestica. ຂ້າພະເຈົ້າເຂົ້າໃຈວ່າ ຖ້າການກະທຳຂອງຂ້າພະເຈົ້າສົ່ງຜົນກະທົບທີ່ບໍ່ດີຕໍ່ກັບຜົນປະໂຫຍດ ແລະ ຊື່ສຽງຂອງ Celestica, ຂ້າພະເຈົ້າອາດຈະຖືກປະຕິບັດວິໄນເຖິງຂັ້ນຖືກໄລ່ອອກ. ຂ້າພະເຈົ້າມຸ່ງໝັ້ນ ທີ່ຈະສະໜັບສະໜູນບັນດາຄ່ານິຍົມ ແລະ ນະໂຍບາຍຂອງພວກເຮົາລວມທັງ BCG. ຂ້າພະເຈົ້າເຮັດວຽກຂອງຂ້າ ພະເຈົ້າກັບເພື່ອນຮ່ວມງານ, ລູກຄ້າ, ຜູ້ສະໜອງສິນຄ້າ, ຄູ່ແຂ່ງ ແລະ ຊຸມຊົນ ດ້ວຍຄວາມຊື່ສັດ ແລະ ເປັນທຳ.

## ຂ້າພະເຈົ້າເວົ້າໃນນາມຂ້າພະເຈົ້າເອງ, ບໍ່ແມ່ນ Celestica

ຂ້າພະເຈົ້າຮູ້ວ່າ ຂ້າພະເຈົ້າບໍ່ຄວນໃຫ້ຄຳຖະແຫຼງຕໍ່ສາທາລະນະກ່ຽວກັບ Celestica ໂດຍການເວົ້າກັບສື່ ຫຼືຜ່ານເຄື່ອງມືເຄືອຂ່າຍສັງຄົມອອນລາຍເທິງອິນເຕີເນັດ ເວັ້ນເສຍແຕ່ວ່າໄດ້ຮັບອະນຸຍາດ. ຖ້າຂ້າພະເຈົ້າບໍ່ໄດ້ຮັບອະນຸຍາດໃຫ້ເວົ້າຕໍ່ສາທາລະນະໃນນາມ Celestica, ຂ້າພະເຈົ້າເຂົ້າໃຈວ່າຂ້າພະເຈົ້າຄວນສົ່ງຄຳຖາມ ຫຼືການສອບຖາມຕ່າງໆຈາກສື່ ຫຼືຜູ້ອື່ນຫາພະແນກການສື່ສານ.

## ຂ້າພະເຈົ້າຮັບປະກັນຄວາມຊື່ສັດສຸດຈະລິດດ້ານການເງິນ

ໃນຖານະເປັນບໍລິສັດມະຫາຊົນ, ບັນທຶກ ແລະ ບັນຊີຂອງ Celestica ຕ້ອງສອດຄ່ອງກັບຫຼັກການບັນຊີ ແລະ ລະບົບການຄວບຄຸມພາຍໃນທີ່ກຳນົດໄວ້ຂອງພວກເຮົາ. ຂ້າພະເຈົ້າບໍ່ເຄີຍເຮັດການບັນທຶກທີ່ບໍ່ເປັນຈິງ ຫຼືເຮັດໃຫ້ເກີດການເຂົ້າໃຈຜິດພາດໃນລາຍງານການເງິນ, ບັນທຶກ ແລະ ບັນຊີຕ່າງໆ. ຂ້າພະເຈົ້າໃຫ້ຄວາມຮ່ວມມືຢ່າງ ເຕັມສ່ວນກັບທຸກການກວດສອບບັນຊີ ແລະ ການສືບສວນພາຍໃນ ຫຼືຕາມການຮ້ອງຂໍຈາກຜູ້ກວດສອບ ແລະ ຜູ້ກວດກາພາຍນອກ ແລະ ໃຫ້ຂໍ້ມູນທີ່ເປັນຈິງ ແລະ ຖືກຕ້ອງ. ຂ້າພະເຈົ້າບໍ່ເຄີຍເຊື່ອງອຳ, ປ່ຽນແປງ ຫຼືທຳລາຍເອກະສານ ຫຼືບັນທຶກທີ່ຖືກຮ້ອງຂໍເອົາຢ່າງຖືກຕ້ອງຕາມກົດໝາຍ ຫຼືຖືກກຳນົດເປັນສ່ວນໜຶ່ງ ຂອງການສືບສວນ. ຂ້າພະເຈົ້າຮັບປະກັນວ່າບັນທຶກທາງທຸລະກິດທີ່ຂ້າພະເຈົ້າຮັບຜິດຊອບ ແມ່ນໄດ້ຮັບການປະຕິບັດຕາມ ນະໂຍບາຍວ່າດ້ວຍການຄຸ້ມຄອງການບັນທຶກຂອງ Celestica.

**ໃນຖານະເປັນພະນັກງານຂອງ Celestica, ຂ້າພະເຈົ້າເຂົ້າໃຈວ່າ BCG ຮຽກຮ້ອງໃຫ້ຂ້າພະເຈົ້າ:**

- ສ້າງຄວາມໄວ້ວາງໃຈຂອງລູກຄ້າ ໂດຍການ ປະຕິບັດຕາມຄຳໝັ້ນສັນຍາຂອງຂ້າພະເຈົ້າ
- ໄດ້ມາ ແລະ ດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍ ແລະ ມີຈັນຍາບັນ
- ເຮັດການຕັດສິນໃຈທາງທຸລະກິດ ໂດຍອີງໃສ່ຜົນປະໂຫຍດທີ່ດີສຸດຂອງ Celestica
- ລາຍງານຄວາມກັງວົນໃຈດ້ານການປະພຶດທາງທຸລະກິດໃນທັນທີ
- ປະຕິບັດຕາມກົດໝາຍ



### ການລາຍງານທີ່ບໍ່ຊື່ສັດມີຄື...

Sue ພະຍາຍາມໄດ້ຮັບຄວາມຄຸ້ມຄອງທາງການແພດ ສໍາລັບລູກຜູ້ໃຫຍ່ຂອງລາວ ໂດຍການສົ່ງ ແບບຟອມອ້າງວ່າລູກຂອງລາວແມ່ນນັກຮຽນເຕັມເວລາ. ຄວາມຈິງແລ້ວ, ລູກຂອງລາວບໍ່ໄດ້ເປັນນັກຮຽນອີກແລ້ວ. ໂດຍການສົ່ງແບບຟອມຮ້ອງຂໍທີ່ບໍ່ເປັນຈິງແນວນັ້ນ, Sue ກໍາລັງປະຕິບັດຕົນແບບບໍ່ມີຈັນຍາບັນ ແລະ ກໍາລັງສໍ້ໂກງບໍລິສັດ.

## ຂ້າພະເຈົ້າລາຍງານຫຍ່າງຖືກຕ້ອງ ແລະ ຊື່ສັດ

ການຮັບປະກັນບັນທຶກທາງທຸລະກິດ ແລະ ການເງິນທີ່ຖືກຕ້ອງ ແລະ ຄົບຖ້ວນ ບໍ່ພຽງແຕ່ແມ່ນຄວາມຮັບຜິດຊອບຂອງພະນັກງານບັນຊີ ແລະ ການເງິນເທົ່ານັ້ນ. ຢູ່ Celestica, ຄວາມຖືກຕ້ອງຂອງບັນທຶກ - ນັບຈາກບັນທຶກດ້ານເວລາ ແລະ ລາຍງານລາຍຈ່າຍໄປຈົນຮອດແບບຟອມຮ້ອງຂໍຜົນປະໂຫຍດຊ່ວຍເຫຼືອ ແລະ ຊີວະປະຫາວັດ - ແມ່ນຄວາມຮັບຜິດຊອບຂອງທຸກໆຄົນ. ເມື່ອຂ້າພະເຈົ້າບັນທຶກທີ່ຖືກຕ້ອງ ເຮັດການລາຍງານທີ່ຊື່ສັດໝາຍຄວາມວ່າ, ຂ້າພະເຈົ້າສະໜັບສະໜູນຊື່ສຽງຂອງ Celestica ແລະ ຊ່ວຍ ຮັບປະກັນໃຫ້ພວກເຮົາຕອບສະໜອງໄດ້ພັນທະທາງກົດໝາຍ ແລະ ກົດລະບຽບຂອງພວກເຮົາ. ຂ້າພະເຈົ້າເຂົ້າໃຈວ່າການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຫຼືເຮັດໃຫ້ເຂົ້າໃຈຜິດ ສາມາດນໍາໄປສູ່ການຮ້ອງຟ້ອງທາງແພ່ງ ຫຼືທາງອາຍາຕໍ່ກັບ Celestica ແລະ ຂ້າພະເຈົ້າໄດ້.

## ຂ້າພະເຈົ້າແມ່ນຜູ້ນໍາທີ່ມີຈັນຍາບັນ

ໃນນາມເປັນຜູ້ຈັດການຂອງ Celestica, ຂ້າພະເຈົ້າຖືກຄາດຫວັງໃຫ້ເປັນຜູ້ນໍາທີ່ມີຈັນຍາບັນ. ຂ້າພະເຈົ້າມີຄວາມຮັບຜິດຊອບໃນການເປັນຕົວຢ່າງທີ່ດີ, ສົ່ງເສີມສະພາບແວດລ້ອມທີ່ມີການສື່ສານຢ່າງເປີດກວ້າງ ແລະ ຈິງໃຈ ໂດຍບໍ່ມີການຢ້ານກົວຕໍ່ການແກ້ແຄ້ນ ແລະ ດໍາເນີນການຢ່າງຮີບດ່ວນ ເມື່ອຂ້າພະເຈົ້າຮັບຮູ້ບັນຫາ ດ້ານຈັນຍາບັນ. ຜູ້ຈັດການຖືກຄາດຫວັງໃຫ້ເປັນແບບຢ່າງໃນດ້ານຄວາມຊື່ສັດສຸດຈະລິດ, ບໍ່ເຄີຍຊີ້ນໍາ ພະນັກງານໃຫ້ບັນລຸຜົນໄດ້ຮັບໂດຍການດໍາເນີນການທີ່ເປັນການລະເມີດນະໂຍບາຍຂອງ Celestica, ນະໂຍບາຍ BCG ຫຼືກົດໝາຍ. ຜູ້ຈັດການຍັງມີຄວາມຮັບຜິດຊອບອະນຸມັດການດໍາເນີນການທຸລະກິດ ຕ່າງໆຢ່າງຖືກຕ້ອງໃນນາມ Celestica. ໃນຖານະເປັນຜູ້ຈັດການ, ຂ້າພະເຈົ້າຕ້ອງຮັບປະກັນວ່າບັນດາເງື່ອນໄຂຂໍ້ກໍານົດຂອງນະໂຍບາຍໄດ້ຮັບຕອບສະໜອງ. ຜົນໄດ້ຮັບທາງທຸລະກິດຕ້ອງບໍ່ສໍາຄັນກວ່າການປະພຶດທີ່ມີຈັນຍາ ບັນ ແລະ ການປະຕິບັດຕາມນະໂຍບາຍຂອງ Celestica, ນະໂຍບາຍ BCG ແລະ ກົດໝາຍ.

# ການສົ່ງເສີມສະພາບແວດລ້ອມການເຮັດວຽກທີ່ດີ

## ຂ້າພະເຈົ້າສະໜັບສະໜູນສະພາບແວດລ້ອມທີ່ປາສະຈາກການເລືອກປະຕິບັດ ແລະ ການຄຸກຄາມ

Celestica ຈະເປັນສະຖານທີ່ເຮັດວຽກທີ່ດີເລີດ ເມື່ອພະນັກງານທຸກຄົນປະກອບສ່ວນສ້າງສະພາບແວດລ້ອມທີ່ປອດໄພ, ສະອາດ, ດີຕໍ່ສຸຂະພາບ ແລະ ໝັ້ນຄົງ. ພວກເຮົາທຸກຄົນຮັບຜິດຊອບໃນການຮັບປະກັນວ່າ ວັດທະນະທຳອົງການຂອງພວກເຮົາແມ່ນປາສະຈາກການເລືອກປະຕິບັດ ແລະ ການຄຸກຄາມທີ່ອີງໃສ່ເຊື້ອຊາດ, ສີຜິວ, ສາສະໜາ, ເພດ, ລັກສະນະທາງເພດ, ສະຖານະພົນລະເມືອງ ແລະ/ຫຼືຕົ້ນກຳເນີດ, ອາຍຸ, ຄວາມພິການ, ຄວາມມັກຮັກທາງເພດ, ສະຖານະການແຕ່ງງານ ຫຼືປັດໃຈອື່ນ. ຂ້າພະເຈົ້າເຂົ້າໃຈວ່າ Celestica ບໍ່ອົດກັ້ນຕໍ່ກັບການລ່ວງລະເມີດ, ການກະທຳ, ຄຳຄິດເຫັນທາງເພດ ຫຼືພຶດຕິກຳອື່ນທີ່ບໍ່ເໝາະສົມຢູ່ສະຖານທີ່ເຮັດວຽກ ທີ່ເປັນໄພຂົ່ມຂູ່, ລ່ວງເກີນ ຫຼືເຮັດໃຫ້ພະນັກງານຄົນ ອື່ນຮູ້ສຶກບໍ່ສະບາຍໃຈ. ສະຖານທີ່ເຮັດວຽກທີ່ປອດໄພ ແລະ ໝັ້ນຄົງຍັງໝາຍເຖິງສະຖານທີ່ເຮັດວຽກທີ່ປາສະຈາກຄວາມຮຸນແຮງ. ການຂົ່ມຂູ່ (ຢ່າງຈະແຈ້ງ ຫຼືເປັນໃບ), ການຂູ່ຂວັນ ແລະ ຄວາມຮຸນແຮງ ແມ່ນບໍ່ໃຫ້ມີເດັດຂາດຢູ່ Celestica. ໃນເວລາທີ່ຂ້າພະເຈົ້າພົບເຫັນ ຫຼືປະສົບກັບການປະພຶດ ແລະ ກິດຈະກຳທີ່ເວົ້າເຖິງຂ້າງເທິງນັ້ນ, ຂ້າພະເຈົ້າຮູ້ວ່າມັນແມ່ນໜ້າທີ່ຂອງຂ້າພະເຈົ້າໃນການລາຍງານສິ່ງນັ້ນທັນທີ.

## ຂ້າພະເຈົ້າສະໜັບສະໜູນສະພາບແວດລ້ອມທີ່ປາສະຈາກການໃຊ້ສານເສບຕິດ

ຂ້າພະເຈົ້າເຂົ້າໃຈວ່າ ການໃຊ້ເຫຼົ້າ, ຢາເສບຕິດ ຫຼືສານພິດອື່ນ ອາດຈະມີຜົນຕໍ່ຄວາມຈະເລີນຮຸ່ງເຮືອງຄວາມສາມາດເຮັດວຽກຂອງຂ້າພະເຈົ້າ. ຍິ່ງກວ່ານັ້ນ, Celestica ມຸ່ງໝັ້ນສ້າງບ່ອນເຮັດວຽກທີ່ປາສະຈາກສິ່ງເສບຕິດ ແລະ ມືນເມົາທຸກປະເພດ ໂດຍປະຕິບັດຕາມກົດໝາຍທີ່ນຳໃຊ້ ແລະ ຫ້າມການຈຳໜ່າຍ, ການຄອບຄອງ ຫຼືການໃຊ້ເຫຼົ້າ, ຢາເສບຕິດ ຫຼືສິ່ງມຶນເມົາອື່ນທີ່ຜິດກົດໝາຍ ຫຼືບໍ່ໄດ້ຮັບອະນຸຍາດຢູ່ໃນຂອບເຂດສະຖານທີ່ຂອງ Celestica. ຍິ່ງກວ່ານັ້ນ, Celestica ຄາດຫວັງໃຫ້ການພິຈາລະນາ ແລະ ການຕັດສິນໃຈຂອງພະນັກງານແມ່ນຈະແຈ້ງ ແລະ ບໍ່ຖືກຄອບງຳໂດຍເຫຼົ້າ, ຢາເສບຕິດ ຫຼືສິ່ງມຶນເມົາອື່ນ. ນອກຈາກຈະກະທົບກັບການເຮັດວຽກ ແລະ ຄວາມສາມາດຕັດສິນໃຈຂອງພະນັກງານເອງແລ້ວ, ການໃຊ້ສານເສບຕິດຫຼືສິ່ງມຶນເມົາຍັງສາມາດສ້າງຄວາມສ່ຽງອັນໃຫຍ່ຫຼວງຕໍ່ກັບຄວາມປອດໄພຂອງຄົນອື່ນ ແລະ ຄວາມຈະເລີນຮຸ່ງເຮືອງຂອງທຸລະກິດຂອງພວກເຮົານຳອີກ.

### ພຶດຕິກຳທີ່ບໍ່ເໝາະສົມຄື...

Grace ແລະ Jose ກຳລັງເຂົ້າຮ່ວມການປະຕິບັດ
ວຽກໜຶ່ງ. ຫຼັງຈາກກິດຈະກຳກໍ່ສ້າງຂອງທີມສຳ
ເລັດແລ້ວ ໝູ່ເພື່ອນບາງຄົນແນະນຳໃຫ້ພວກເຂົາໄປ ຮ້ານບັນເທີງສຳລັບຜູ້ໃຫຍ່ນຳກັນ. Grace ແລະ Jose ໄປນຳທີມງານ ແຕ່ພວກເຂົາຮູ້ສຶກບໍ່ສະບາຍໃຈ
ແລະ ໄດ້ອອກຈາກສະຖານທີ່ນັ້ນ. ການເຂົ້າຮ່ວມສະ ຖານທີ່ດັ່ງກ່າວໃນຂະນະເປັນຕົວແທນໃຫ້ Celestica ແມ່ນບໍ່ສອດຄ່ອງກັບຄ່ານິຍົມ ຫຼືນະໂຍບາຍ BCG ຂອງພວກເຮົາ. ອີງຕາມນະໂຍບາຍວ່າດ້ວຍການເດີນທາງ
ແລະ ການບັນເທີງຂອງພວກເຮົາ
, ລາຍຈ່າຍທີ່ ກ່ຽວຂ້ອງກັບສະຖານບັນເທີງດັ່ງກ່າວຈະບໍ່ໄດ້ ຮັບການຈ່າຍແທນຄືນໃຫ້ໂດຍ Celestica.

# ແຜນວາດການຕັດສິນໃຈດ້ານຈັນຍາບັນ

**ແຜນວາດການຕັດສິນໃຈນີ້ສາມາດເປັນເຄື່ອງມືທີ່ມີປະໂຫຍດ ໃນເວລາທ່ານປະເຊີນກັບການຕັດສິນໃຈທີ່ລຳບາກ.**

**ຖາມຕົວເອງ:**

**ມັນຖືກກົດໝາຍບໍ?**
- ບໍ່ → ການກະທຳອາດຈະມີຜົນຕາມມາທີ່ຮ້າຍແຮງ. ຢ່າເຮັດມັນ.
- ບໍ່ແນ່ໃຈ → ໃຫ້ຕິດຕໍ່ຫາພະແນກກົດໝາຍເພື່ອຂໍຄຳແນະນຳ.
- ແມ່ນ ↓

**ສິ່ງນີ້ສອດຄ່ອງກັບນະໂຍບາຍ BCG ຫຼືນະໂຍບາຍອື່ນຂອງ Celestica ບໍ?**
- ບໍ່ → ການກະທຳອາດຈະມີຜົນຕາມມາທີ່ຮ້າຍແຮງ. ຢ່າເຮັດມັນ.
- ບໍ່ແນ່ໃຈ → ໂອ້ລົມກັບຜູ້ຈັດການຂອງທ່ານ, ຜູ້ຕາງໜ້າຝ່າຍຊັບພະຍາກອນມະນຸດ ຫຼືພະແນກປະຕິບັດຕາມ ເພື່ອຂໍຄຳແນະນຳ.
- ແມ່ນ ↓

**ສິ່ງນີ້ສະທ້ອນເຖິງຄ່ານິຍົມ ແລະ ວັດທະນະທຳຂອງ Celestica ບໍ?**
- ບໍ່ → ການກະທຳອາດຈະມີຜົນຕາມມາທີ່ຮ້າຍແຮງ. **ຢ່າເຮັດມັນ.**
- ບໍ່ແນ່ໃຈ → ໂອ້ລົມກັບຜູ້ຈັດການຂອງທ່ານ, ຜູ້ຕາງໜ້າຝ່າຍຊັບພະຍາກອນມະນຸດ ຫຼືພະແນກປະຕິບັດຕາມ ເພື່ອຂໍຄຳແນະນຳ.
- ແມ່ນ ↓

**ທ່ານຈະຮູ້ສຶກເປັນກັງວົນບໍ ຖ້າສິ່ງນີ້ປະກົດໃນຫົວຂໍ້ຂ່າວ?**
- ບໍ່ → ການກະທຳອາດຈະມີຜົນຕາມມາທີ່ຮ້າຍແຮງ. **ຢ່າເຮັດມັນ.**
- ບໍ່ແນ່ໃຈ → ໂອ້ລົມກັບຜູ້ຈັດການຂອງທ່ານ, ຜູ້ຕາງໜ້າຝ່າຍຊັບພະຍາກອນມະນຸດ ຫຼືພະແນກປະຕິບັດຕາມ ເພື່ອຂໍຄຳແນະນຳ.
- ແມ່ນ ↓

**ສິ່ງນີ້ສາມາດມີຜົນກະທົບທີ່ບໍ່ດີຕໍ່ກັບ Celestica ບໍ ຖ້າພະນັກງານທຸກຄົນເຮັດມັນ?**
- ບໍ່ → ການກະທຳອາດຈະມີຜົນຕາມມາທີ່ຮ້າຍແຮງ. **ຢ່າເຮັດມັນ.**
- ບໍ່ແນ່ໃຈ → ໂອ້ລົມກັບຜູ້ຈັດການຂອງທ່ານ, ຜູ້ຕາງໜ້າຝ່າຍຊັບພະຍາກອນມະນຸດ ຫຼືພະແນກປະຕິບັດຕາມ ເພື່ອຂໍຄຳແນະນຳ.
- ແມ່ນ ↓

**ການຕັດສິນໃຈດຳເນີນການຕໍ່ແມ່ນເໝາະສົມ.**

# ການດຳເນີນທຸລະກິດຂອງພວກເຮົາ ແລະ ການປະກອບສ່ວນພັດທະນາຊຸມຊົນຂອງພວກເຮົາ

## ຂ້າພະເຈົ້າມຸ່ງໝັ້ນຕໍ່ກັບການເຮັດວຽກຢ່າງຍຸຕິທໍາ

ຢູ່ Celestica, ພວກເຮົາເຮັດວຽກກັບຫຼາກຫຼາຍຜູ້ຄົນ ແລະ ອົງການຈັດຕັ້ງ - ນັບຈາກລູກຄ້າ ແລະ ຜູ້ສະໜອງສິນຄ້າ ໄປຈົນຮອດສະຖາບັນການສຶກສາ, ລັດຖະບານ ແລະ ຊຸມຊົນ. ທຸກໆຄົນທີ່ຂ້າພະເຈົ້າເຮັດທຸລະກິດ ຫຼືມີສັນຍານໍາ ລ້ວນແຕ່ມີສິດໄດ້ຮັບການປະຕິບັດຢ່າງເປັນທໍາ ລວມທັງຄູ່ແຂ່ງຂອງພວກເຮົາ. ຂ້າພະເຈົ້າຮູ້ວ່າ ການສື່ສານທີ່ຈະແຈ້ງ ແລະ ຈິງໃຈ ແມ່ນສິ່ງສຳຄັນຕໍ່ກັບການປະພຶດທີ່ມີຈັນຍາບັນ ແລະ ການສ້າງຄວາມສຳພັນທີ່ດີ ແລະ ຍືນຍາວຢູ່ພາຍໃນ Celestica ແລະ ກັບຫຸ້ນສ່ວນພາຍນອກຂອງພວກເຮົາ. ຂ້າພະເຈົ້າບໍ່ເຄີຍໃຊ້ຂໍ້ມູນທີ່ບິດເບືອນກ່ຽວກັບຂ້າພະເຈົ້າເອງ ຫຼື Celestica ຕໍ່ກັບຜູ້ໃດຜູ້ໜຶ່ງ.

ຄ່ານິຍົມຂອງພວກເຮົາຮັບເອົາຜູ້ສະໜອງສິນຄ້າຂອງພວກເຮົາເປັນສ່ວນໜຶ່ງຂອງທີມງານຂອງພວກເຮົາ. ນັ້ນໝາຍຄວາມວ່າ ຂ້າພະເຈົ້າຕ້ອງປະຕິບັດຕໍ່ຜູ້ສະໜອງສິນຄ້າທຸກຄົນຢ່າງເທົ່າທຽມ ແລະ ຍຸຕິທຳ, ບໍ່ເຄີຍໃຊ້ອິດທິພົນຂອງຂ້າພະເຈົ້າເພື່ອໃຫ້ໄດ້ຮັບການປະຕິບັດແບບພິເສດ ຫຼືໃຊ້ກັບຜູ້ສະໜອງສິນຄ້າສະເພາະໃດໜຶ່ງ. ຄວາມມຸ່ງໝັ້ນຂອງພວກເຮົາຕໍ່ກັບຂະບວນການຄັດເລືອກທີ່ຍຸຕິທຳ ເຮັດໃຫ້ລູກຄ້າຂອງພວກເຮົາມີຄວາມໝັ້ນໃຈໃນຄວາມຊື່ສັດຂອງພວກເຮົາ ແລະ ຊ່ວຍພວກເຮົາຮັກສາຄວາມສຳພັນທີ່ດີກັບພວກເຂົາ.

## ຂ້າພະເຈົ້າເຄົາລົບສິດຂອງຄູ່ແຂ່ງ

ຢູ່ທີ່ Celestica, ພວກເຮົາເຊື່ອໃນການແຂ່ງຂັນທີ່ຍຸຕິທຳ ແລະ ເປີດກວ້າງ. ໃນຂະນະທີ່ພວກເຮົາແຂ່ງຂັນຢ່າງຈິງຈັງ, ພວກເຮົາປະຕິບັດຕາມກົດໝາຍວ່າດ້ວຍການຕ້ານການຜູກຂາດ ແລະ ການແຂ່ງຂັນທີ່ນຳໃຊ້ໃນທຸກບ່ອນທີ່ພວກເຮົາເຮັດທຸລະກິດ. ຂ້າພະເຈົ້າເຄົາລົບສິດຂອງຄູ່ແຂ່ງຂອງພວກເຮົາ ແລະ ດຳເນີນຢ່າງຍຸຕິທຳ. ຂ້າພະເຈົ້າບໍ່ພົວພັນໃນການປະຕິບັດທາງການຄ້າທີ່ບໍ່ຍຸຕິທຳ ຫຼືຜິດກົດໝາຍ. ຂ້າພະເຈົ້າສະໜັບສະໜູນນະໂຍບາຍຂອງ Celestica ໃນການສ້າງຕະຫຼາດຜະລິດຕະພັນ ແລະ ການບໍລິການຂອງພວກເຮົາແມ່ນອີງໃສ່ຈຸດດີຂອງພວກມັນເປັນພື້ນຖານ, ບໍ່ເຄີຍດູຖູກຄູ່ແຂ່ງ ຫຼືຜະລິດຕະພັນ ຫຼືການບໍລິການຂອງເຂົາເຈົ້າ. ຂ້າພະເຈົ້າຫຼີກລ້ຽງການໃຫ້ຄຳເວົ້າທີ່ບໍ່ເປັນຈິງ ຫຼືເຮັດໃຫ້ເຂົ້າໃຈຜິດ.

ໃນບາງກໍລະນີ, ບໍລິສັດໃດໜຶ່ງອາດຈະເປັນທັງຄູ່ແຂ່ງ ແລະ ເປັນລູກຄ້າ ຫຼືຜູ້ສະໜອງສິນຄ້າ. ແລະ ບາງຄັ້ງ, ຂ້າພະເຈົ້າອາດຈະພົບປະ, ໂອ້ລົມ ແລະ ເຂົ້າຮ່ວມງານຂະແໜງດຽວກັນກັບຄູ່ແຂ່ງຂອງພວກເຮົາ. ຂ້າພະເຈົ້າເອົາໃຈໃສ່ເປັນພິເສດກັບຄວາມສຳພັນ ແລະ ສະພາບການເຫຼົ່ານີ້.

### ຂ້າພະເຈົ້າບໍ່ເຄີຍໂອ້ລົມກ່ຽວກັບຂໍ້ມູນລັບຂອງ Celestica ກັບຄູ່ແຂ່ງ ຫຼືເຮັດການຕົກລົງເຫັນດີ ເພື່ອ:

- ກຳນົດລາຄາ
- ແບ່ງປັນຂໍ້ມູນກ່ຽວກັບການກຳນົດລາຄາ, ຜົນກຳໄລ, ຕົ້ນທຶນ, ຂໍ້ກຳນົດການຂາຍ, ລູກຄ້າ, ການສົ່ງເສີມການຂາຍ, ສ່ວນຫຼຸດ, ການຕະຫຼາດ ຫຼືແຜນຍຸດທະສາດ
- ແບ່ງໂອກາດ ຫຼືເຂດແດນການຂາຍ
- ບໍ່ຊັກຊວນເອົາລູກຄ້າຂອງກັນ ແລະ ກັນ
- ບໍ່ຂາຍຜະລິດຕະພັນ ຫຼືການບໍລິການສະເພາະ
- ‵ແກ້ໄຂ’ ຂະບວນການປະມູນແບບແຂ່ງຂັນກັນ
- ບົດລົງໂທດຕໍ່ຜູ້ສະໜອງ ຫຼືຜູ້ຂາຍສິນຄ້າສະເພາະໃດໜຶ່ງ



### ການຕິດສິນບົນຄື...

Mark ແມ່ນຜູ້ຊື້ຢູ່ Celestica. Bob ໜຶ່ງໃນຜູ້ສະໜອງສິນຄ້າຂອງລາວ, ແນະນໍາວ່າ ຖ້າ Mark ຖອນທຸລະກິດຂອງລາວຈາກຜູ້ສະໜອງສິນຄ້າທີ່ເປັນຄູ່ແຂ່ງ ແລະ ເຮັດການສັ່ງຊື້ຊຸດໃຫຍ່ນໍາບໍລິສັດຂອງ Bob, ລາວຈະໃຫ້ "ຜົນປະໂຫຍດພິເສດ" ຫຼາຍຢ່າງແກ່ Mark.

## ຂ້າພະເຈົ້າເຂົ້າໃຈນະໂຍບາຍຂອງ Celestica ກ່ຽວກັບສິນບົນ ແລະ ຂອງຂວັນ

ນະໂຍບາຍຂອງພວກເຮົາ ເຊັ່ນດຽວກັນກັບກົດໝາຍຂອງເກືອບທຸກປະເທດທີ່ພວກເຮົາເຮັດທຸລະກິດ ຫ້າມບໍ່ໃຫ້ພວກເຮົາໃຫ້ ຫຼືຮັບເອົາສິນບົນເພື່ອຈຸດປະສົງໃດໆກໍ່ຕາມ. ຕົວຢ່າງຂອງສິນບົນລວມມີການຈ່າຍເງິນສົດໂດຍກົງ, ເງິນໃຕ້ໂຕະ ຫຼືໃບຮຽກເກັບເງິນສໍາລັບລາຍຈ່າຍແອບແຝງເຊື່ອງອໍາ.

ພວກເຮົາເຮັດການຕັດສິນໃຈຊື້ຜະລິດຕະພັນ ແລະ ການບໍລິການຈາກຜູ້ຂາຍ, ຜູ້ສະໜອງສິນຄ້າ ແລະ ອື່ນໆໂດຍອີງໃສ່ເງື່ອນໄຂ ເຊັ່ນວ່າ ຄຸນນະພາບ, ລາຄາ ແລະ ຄວາມເຊື່ອຖືໄດ້, ແລະ ພວກເຮົາຄາດຫວັງວ່າລູກຄ້າຂອງພວກເຮົາຈະຊື້ຜະລິດຕະພັນ ແລະ ການບໍລິການຂອງພວກເຮົາໂດຍອີງໃສ່ພື້ນຖານດຽວກັນ. ຂ້າພະເຈົ້າເຂົ້າໃຈວ່າ ການໃຫ້ ຫຼືການຮັບຂອງຂວັນ ແລະ ການບັນເທີງສາມາດມີຜົນກະທົບທີ່ເປັນໄປໄດ້ຕໍ່ກັບຄວາມເປັນກາງ ແລະ ການຕັດສິນໃຈ. ຂ້າພະເຈົ້າອາດຈະໃຫ້ ຫຼືຮັບເອົາຂອງຂວັນ, ອາຫານ, ການບໍລິການ ແລະ ການບັນເທີງ ຖ້າສິ່ງ ເຫຼົ່າ ນີ້:

- ບໍ່ເກີດຂຶ້ນເລື້ອຍໆ ແລະ ບໍ່ມີມູນຄ່າສູງເກີນໄປ
- ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ແລະ ສອດຄ່ອງກັບວິທີປະຕິບັດ ຫຼືມາລະຍາດທາງທຸລະກິດທີ່ເປັນທໍາ
  ນຽມປະຕິບັດກັນມາ
- ຈະບໍ່ເຮັດໃຫ້ຂ້າພະເຈົ້າມີພັນທະໃດໆຕໍ່ກັບບຸກຄົນຜູ້ທີ່ໃຫ້ຂອງຂວັນນັ້ນ
- ບໍ່ລວມມີເງິນສົດ
- ບໍ່ເຄີຍເອົາໃຫ້ ຫຼືໄດ້ຮັບຈາກ ເຈົ້າໜ້າທີ່ລັດຖະບານ

ມັນບໍ່ງ່າຍສະເໝີໄປທີ່ຈະກໍານົດວ່າແມ່ນຫຍັງແດ່ທີ່ເໝາະສົມ ຫຼືບໍ່ແພງເກີນໄປ ເມື່ອເວົ້າເຖິງການໃຫ້ ແລະ ການຮັບຂອງຂວັນ. ໃນກໍລະນີເຫຼົ່ານີ້, ຂ້າພະເຈົ້າໃຊ້ການຕັດສິນທີ່ຮອບຄອບຂອງຂ້າພະເຈົ້າ ແລະ ຖາມຕົວເອງບັນດາຄໍາຖາມຕໍ່ໄປນີ້:

- ບຸກຄົນຜູ້ທີ່ຂ້າພະເຈົ້າວາງແຜນຈະໃຫ້ຂອງຂວັນມີນະໂຍບາຍຫ້າມເຮັດສິ່ງນີ້ຢູ່ບ່ອນເຮັດວຽກບໍ? ເມື່ອບໍ່ແນ່ໃຈ, ຂ້າພະເຈົ້າກວດເບິ່ງກອນ.
- ມັນ ເບິ່ງແລ້ວ ຖືກຕ້ອງຢູ່ບໍ? ຖ້າບໍ່, ຂ້າພະເຈົ້າບໍ່ຮັບເອົາມັນ, ບໍ່ໃຫ້ມັນ ຫຼື ຂ້າພະເຈົ້າຂໍຄໍາແນະນໍາກ່ອນລ່ວງໜ້າ.
- ໃນປະເທດບ່ອນທເຫັນວ່າ ການສົ່ງຄືນ ຫຼື ປະຕິເສດການຮັບຂອງຂວັນເປັນການເສຍມາລະຍາດ ຂ້າພະເຈົ້າຈະຮັບມັນບໍ? ໃນບາງປະເທດ, ການສົ່ງຄືນ ຫຼືການປະຕິເສດຂອງຂວັນໃດໜຶ່ງອາດຈະເປັນການເສຍມາລະຍາດ. ຖ້າສິ່ງນີ້ເກີດຂຶ້ນ, ຂ້າພະເຈົ້າຄວນຮັບເອົາຂອງຂວັນນັ້ນ ແລະ ປຶກສາກັບຜູ້ຈັດການໃນທັນທີເພື່ອຂໍຄໍາແນະນໍາກ່ຽວກັບວ່າຈະຈັດການກັບຂອງຂວັນນັ້ນແນວໃດ.



Celestica ຈະສະຫຼະໂອກາດທາງທຸລະກິດ ແທນທີ່ຈະຈ່າຍສິນບົນ. ຈົ່ງພິຈາລະນາສະພາບການຕໍ່ໄປນີ້.

## ຄໍາຖາມ ແລະ ຄໍາຕອບ

**ຄໍາຖາມ 1:** ໜຶ່ງໃນລູກຄ້າຂອງຂ້າພະເຈົ້າກໍາລັງວາງແຜນການເດີນທາງຈາກຫ້ອງການຂອງລາວໃນອາຊີຕາເວັນອອກສ່ຽງໃຕ້ ເພື່ອໄປຢ້ຽມຢາມສໍານັກງານໃຫຍ່ຂອງ Celestica ເພື່ອພົບກັບທີມຜູ້ບໍລິຫານຂອງພວກເຮົາ. ລູກຄ້າຂອງຂ້າພະເຈົ້າບອກຂ້າພະເຈົ້າວ່າ ລາວຫວັງວ່າຈະໄດ້ຮັບການຈ່າຍແທນຄືນສໍາລັບທຸກຄ່າເດີນທາງຂອງລາວ ລວມທັງລາຍຈ່າຍສ່ວນຕົວທີ່ລາວວາງແຜນຈະໃຊ້ຈ່າຍ ໃນຂະນະທີ່ທ່ຽວຊົມເຂດພື້ນທີ່. ຂ້າພະເຈົ້າສາມາດອະນຸມັດສິ່ງນີ້ໄດ້ບໍ?

**ຄໍາຕອບ 1:** ບໍ່ໄດ້. ທ່ານບໍ່ສາມາດອະນຸມັດການຈ່າຍແທນຄືນສໍາລັບລາຍຈ່າຍທີ່ບໍ່ກ່ຽວຂ້ອງກັບທຸລະກິດຂອງລູກຄ້າ ເຊັ່ນວ່າ: ການເດີນທາງໄປທ່ຽວຊົມເມືອງ ຫຼືຄ່າປີ້ຍົນສໍາລັບສະມາຊິກຄອບຄົວ. Celestica ບໍ່ສາມາດຈ່າຍຄ່າລາຍຈ່າຍເຫຼົ່ານີ້ໄດ້ ເພາະວ່າການເຮັດແບບນັ້ນອາດຈະສ້າງລັກສະນະເປັນການໃຫ້ສິນບົນ. ທຸກລາຍຈ່າຍທີ່ສາມາດຈ່າຍແທນຄືນ ໄດ້ຕ້ອງ (1) ກ່ຽວຂ້ອງກັບຈຸດປະສົງທາງທຸລະກິດຢ່າງແທ້ຈິງ, (2) ສົມເຫດສົມຜົນ ແລະ (3) ສາມາດອະນຸຍາດໄດ້ພາຍໃຕ້ ທຸກກົດໝາຍທີ່ນໍາໃຊ້  ນະໂຍບາຍຂອງ Celestica.

**ຄໍາຖາມ 2:** ພວກເຮົາໃຊ້ຕົວແທນເພື່ອອໍານວຍຄວາມສະດວກຄວາມສໍາພັນກັບເຈົ້າໜ້າທີ່ລັດຖະບານທ້ອງຖິ່ນ. ຫວ່າງບໍ່ດົນມານີ້ ລາວຮ້ອງຂໍໃຫ້ພວກເຮົາເພີ່ມຄ່ານາຍໜ້າຂອງລາວຂຶ້ນຢ່າງຫຼວງຫຼາຍ ເຖິງແມ່ນວ່າພວກເຮົາບໍ່ໄດ້ເພີ່ມຄວາມຮັບຜິດຊອບຂອງລາວຂຶ້ນ ຫຼືຮ້ອງຂໍໃຫ້ລາວເຮັດໜ້າວຽກເພີ່ມເຕີມໃດໆກໍ່ຕາມ. ຂ້າພະເຈົ້າສົງໄສວ່າ ລາວຕ້ອງການສົ່ງຕໍ່ເງິນນີ້ໃຫ້ເຈົ້າໜ້າທີ່ທ້ອງຖິ່ນ. ຂ້າພະເຈົ້າຄວນເຮັດແນວໃດ?

**ຄໍາຕອບ 2:** ຖ້າທ່ານສົງໄສວ່າ ຕົວແທນນັ້ນກໍາລັງເຮັດການຈ່າຍເງິນທີ່ຜິດກົດໝາຍໃນນາມ Celestica, ບໍລິສັດນັ້ນມີພັນທະຕ້ອງສືບສວນເບິ່ງວ່ານີ້ແມ່ນບັນຫາແທ້ຫຼືບໍ່ ແລະ ຢຸດເຊົາການຈ່າຍເງິນດັ່ງກ່າວ. ທ່ານຄວນລາຍງານຄວາມສົງໄສຂອງທ່ານຫາພະແນກກົດໝາຍ ຫຼືການປະຕິບັດຕາມ.

**ຄໍາຖາມ 3:** ຂ້າພະເຈົ້າໄດ້ຮັບການບອກວ່າ ໃນບາງປະເທດ ມັນແມ່ນເລື່ອງປົກກະຕິໃນການຈ່າຍເງິນສົມມະນາບຸນຄຸນຈໍານວນເລັກນ້ອຍໃຫ້ລູກຄ້າ ກ່ອນທີ່ພວກເຂົາຈະຊື້ຜະລິດຕະພັນຂອງ Celestica. ຂ້າພະເຈົ້າຄວນຈ່າຍເງິນສົມມະນາບຸນຄຸນນັ້ນບໍ່ ເພື່ອໃຫ້ຂ້າພະເຈົ້າບໍ່ສູນເສຍທຸລະກິດ?

**ຄໍາຕອບ 3:** ບໍ່. ພວກເຮົາບໍ່ເຂົ້າຮ່ວມໃນທຸລະກິດທີ່ມີການຈ່າຍເງິນທີ່ບໍ່ເໝາະສົມ ຫຼືຜິດກົດໝາຍ. ຄວນຕິດຕໍ່ຫາພະແນກກົດໝາຍ ແລະ ການປະຕິບັດຕາມ ຖ້າທ່ານບໍ່ແນ່ໃຈວ່າເງິນທີ່ຖືກຮ້ອງຂໍນັ້ນໄດ້ຮັບອະນຸຍາດຫຼືບໍ່. ຖ້າທ່ານຮູ້ກ່ຽວກັບການໃຊ້ຂອງຂວັນ, ສິນບົນ, ເງິນສົມມະນາບຸນຄຸນ, ເງິນໃຕ້ໂຕະ, ເງິນປິດລັບ ຫຼືສິ່ງຈູງໃຈຕ່າງໆໃຫ້ແກ່ໃຜກໍ່ຕາມ ລວມທັງລູກຄ້າ, ຕົວແທນ ຫຼືພະນັກງານຂອງເຂົາເຈົ້າ (ຫຼືສະມາຊິກຄອບຄົວຂອງເຂົາເຈົ້າ), ເພື່ອສ້າງທຸລະກິດ, ທ່ານຄວນຕິດຕໍ່ຫາພະແນກກົດໝາຍ ຫຼືການປະຕິບັດຕາມໃນທັນທີ.




**ຕົວຢ່າງຂອງການຂັດແຍ້ງຜົນປະໂຫຍດທີ່ເປັນໄປໄດ້ ລວມມີ:**

- ການມີຜົນປະໂຫຍດດ້ານການເງິນໃນອົງການຈັດຕັ້ງໃດໆກໍ່ຕາມທີ່ Celestica ເຮັດທຸລະກິດນຳ ລວມທັງຜູ້ສະໜອງສິນຄ້າ , ຄູ່ແຂ່ງ, ລູກຄ້າ ແລະ ຜູ້ຈຳໜ່າຍສິນຄ້າ
- ໃຊ້ປະໂຫຍດຈາກໂອກາດທີ່ຄົ້ນພົບຜ່ານການໃຊ້ຊັບສິນ, ຂໍ້ມູນ ຫຼືຖານະຂອງບໍລິສັດ ຫຼືການໃຊ້ສິ່ງເຫຼົ່ານີ້ເພື່ອຜົນປະໂຫຍດສ່ວນຕົວ
- ການມີຄູ່ສົມລົດ, ສະມາຊິກໃນຄອບຄົວຂອງຂ້າພະເຈົ້າ ຫຼືຄົນອື່ນທີ່ຂ້າພະເຈົ້າສະໜິດສະໜົມຜູ້ທີ່ເຮັດວຽກໃຫ້ ລູກຄ້າ, ຜູ້ສະໜອງສິນຄ້າ ຫຼືຄູ່ແຂ່ງຂອງ Celestica. ສະພາບການນີ້ຮຽກຮ້ອງໃຫ້ມີຄວາມອ່ອນໄຫວພິ ເສດ ແລະ ຄວນປຶກສາຫາລືກັບຜູ້ຈັດການຂອງຂ້າພະເຈົ້າ
- ການໃຫ້ຄວາມຊ່ວຍເຫຼືອແກ່ ຫຼືເຮັດວຽກໃຫ້ຄູ່ແຂ່ງຂອງ Celestica ໃນຖານະເປັນພະນັກງານ ຫຼືທີ່ປຶກສາ
- ການເຂົ້າຮ່ວມໃນກິດຈະກຳທີ່ຂັດແຍ້ງກັບຜົນປະໂຫຍດທາງທຸລະກິດຂອງ Celestica ເຊັ່ນວ່າການເຮັດການຕະຫຼາດທາງການຄ້າໃຫ້ຜະລິດຕະພັນ ຫຼືການບໍລິການທີ່ແຂ່ງຂັນກັນ
- ການດຳເນີນການໃນນາມ ຫຼືຕາງໜ້າໃຫ້ຜູ້ສະໜອງສິນຄ້າຂອງ Celestica ໂດຍບໍ່ມີການຍິນຍອມເຫັນດີຈາກ Celestica
- ການຮັບຕຳແໜ່ງໃນສະພາຜູ້ອຳນວຍການຂອງຜູ້ສະໜອງສິນຄ້າ ຫຼືຄູ່ແຂ່ງໂດຍບໍ່ມີການຍິນຍອມເຫັນດີຂອງ Celestica
- ການເຮັດ ຫຼືການຮ້ອງຂໍເອົາວຽກງານພາຍນອກຢູ່ສະຖານທີ່ຂອງ Celestica ຫຼືໃນຂະນະທີ່ໃຊ້ເວລາເຮັດວຽກຂອງ Celestica
- ການໃຊ້ອຸປະກອນຂອງ Celestica ເຊັ່ນວ່າ ໂທລະສັບ, ວັດສະດຸ, ຊັບພະຍາກອນ ຫຼືຂໍ້ມູນລັບ ເພື່ອເຮັດວຽກພາຍນອກ

## ຂ້າພະເຈົ້າເຄົາລົບຄວາມສຳພັນຂອງພວກເຮົາກັບພະນັກງານລັດຖະບານ

ຢູ່ທີ່ Celestica, ພວກເຮົາເຂົ້າໃຈວ່າສິ່ງນີ້ແມ່ນວິທີປະຕິບັດທີ່ຍອມຮັບໄດ້ ໃນສະພາບແວດລ້ອມທາງການຄ້າອາດຈະເປັນສິ່ງທີ່ບໍ່ສາມາດຍອມຮັບໄດ້ ຫຼືຜິດກົດໝາຍໃນການເຮັດວຽກກັບພະນັກງານລັດຖະບານ. ຕົວຢ່າງ: ບາງກົດລະບຽບຫ້າມ ຫຼືຈຳກັດຂອງຂວັນທີ່ເປັນອາຫານ ຫຼືການບັນເທີງໃຫ້ແກ່ພະນັກງານລັດຖະບານ. ຂ້າພະເຈົ້າເຂົ້າໃຈວ່າ ມັນແມ່ນໜ້າທີ່ຂອງຂ້າພະເຈົ້າໃນການຮັບຮູ້ ແລະ ປະຕິບັດຕາມກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງທີ່ຄວບຄຸມຄວາມສຳພັນລະຫວ່າງລັດຖະບານ, ລູກຄ້າ ແລະ ຜູ້ສະໜອງສິນຄ້າ.

## ຂ້າພະເຈົ້າຫຼີກລ້ຽງການຂັດແຍ້ງຜົນປະໂຫຍດ

ໃນເວລາປະຕິບັດໜ້າວຽກຂອງຂ້າພະເຈົ້າ, ຂ້າພະເຈົ້າດຳເນີນການເພື່ອຜົນປະໂຫຍດທີ່ດີທີ່ສຸດຂອງ Celestica ສະເໝີ. ການຂັດແຍ້ງຜົນປະໂຫຍດເກີດຂຶ້ນ ເມື່ອຜົນປະໂຫຍດ ແລະ ຄວາມສຳພັນສ່ວນຕົວຂອງຂ້າພະເຈົ້າສົ່ງຜົນ ຫຼືປະກົດວ່າສົ່ງຜົນຕໍ່ຄວາມສາມາດຂອງຂ້າພະເຈົ້າໃນການຕັດສິນໃຈເພື່ອຜົນປະໂຫຍດທີ່ດີທີ່ສຸດຂອງບໍລິສັດ. ການຂັດແຍ້ງຜົນປະໂຫຍດຍັງສາມາດເກີດຂຶ້ນເມື່ອຂ້າພະເຈົ້າດຳເນີນການ ຫຼືມີຜົນປະໂຫຍດທີ່ເຮັດໃຫ້ຍາກສຳລັບຂ້າພະເຈົ້າໃນການປະຕິບັດວຽກງານຂອງຂ້າພະເຈົ້າຢ່າງບໍ່ລຳອຽງ ແລະ ມີປະສິດທິຜົນ. ຖ້າຂ້າພະເຈົ້າມີການຈ້າງງານຢູ່ນອກ Celestica, ການຈ້າງງານດັ່ງກ່າວບໍ່ສາມາດຂັດກັບຄວາມຮັບຜິດຊອບຂອງຂ້າພະເຈົ້າຕໍ່ກັບ Celestica ຫຼືສົ່ງຜົນຕໍ່ຄວາມສາມາດຂອງຂ້າພະເຈົ້າໃນການປະຕິບັດໜ້າວຽກຂອງຂ້າພະເຈົ້າຢູ່ Celestica. ຕາມທີ່ໄດ້ລະບຸໄວ້ໃນ ນະໂຍບາຍເລື່ອງຄວາມຂັດແຍ່ງດ້ານຜົນປະໂຫຍດ ແລະ ຄວາມສຳພັນສ່ວນບຸກຄົນ ຂອງບໍລິສັດ.

## ຂ້າພະເຈົ້າປະກອບສ່ວນເຂົ້າໃນຊຸມຊົນຂອງຂ້າພະເຈົ້າ

ການມີສ່ວນຮ່ວມໃນຊຸມຊົນແມ່ນອົງປະກອບທີ່ສຳຄັນຂອງຄ່ານິຍົມຂອງພວກເຮົາຢູ່ Celestica. ຂ້າພະເຈົ້າໄດ້ຮັບການສົ່ງເສີມໃຫ້ເຄື່ອນໄຫວຊີວິດໃນຖານະ ພົນລະເມືອງທົ່ວໄປຂອງຊຸມຊົນຂອງຂ້າພະເຈົ້າຜ່ານການປະກອບສ່ວນເວລາ ແລະ ທຶນຮອນຂອງຂ້າພະເຈົ້າ.



ແນວໃດກໍ່ຕາມ, ມີບາງຄັ້ງເມື່ອການມີສ່ວນຮ່ວມໃນຊຸມຊົນຂອງຂ້າພະເຈົ້າສາມາດກໍ່ໃຫ້ເກີດບັນຫາແກ່ Celestica, ແລະ ຂ້າພະເຈົ້າຕ້ອງລະມັດລະວັງ ແລະ ດໍາເນີນການເພື່ອຜົນປະໂຫຍດທີ່ດີສຸດຂອງບໍລິສັດຂອງພວກເຮົາ. ຕົວຢ່າງ:

- ຖ້າຂ້າພະເຈົ້າເຮັດໜ້າທີ່ໃນຄະນະກໍາມະການຂອງອົງການຫາວັງຜົນກໍາໄລ ຫຼືບໍ່ຫາວັງຜົນກໍາໄລໃດໜຶ່ງ, ການຂັດແຍ້ງຜົນປະໂຫຍດອາດເກີດຂື້ນ ຖ້າຂ້າພະເຈົ້າປະເຊີນກັບການຕັດສິນໃຈທີ່ກ່ຽວຂ້ອງກັບ Celestica. ຖ້າຄະນະກໍາມະການທີ່ຂ້າພະເຈົ້າຮັບໃຊ້ ມີການເຮັດວຽກກັບ Celestica, ຂ້າພະເຈົ້າຄວນປຶກສາຫາລືກັບຜູ້ຈັດການຂອງຂ້າພະເຈົ້າກ່ອນເພື່ອຕັດສິນວ່າການເຮັດໜ້າທີ່ໃນຄະນະກໍາມະການດັ່ງກ່າວແມ່ນການຂັດແຍ້ງຜົນປະໂຫຍດຫຼືບໍ່
- ຖ້າຂ້າພະເຈົ້າເວົ້າກ່ຽວກັບບັນຫາສາທາລະນະ, ຂ້າພະເຈົ້າກໍາລັງເວົ້າ ແລະ ດໍາເນີນການໃນນາມສ່ວນຕົວ ແລະ ຕ້ອງບໍ່ໃຫ້ການປະກົດວ່າຂ້າພະເຈົ້າກໍາລັງເວົ້າໃນນາມຕາງໜ້າ ໃຫ້ Celestica
- ຖ້າຂ້າພະເຈົ້າເຂົ້າຮ່ວມໃນກິດຈະກໍາທາງການເມືອງ, ຂ້າພະເຈົ້າເຂົ້າໃຈວ່າ ໃນຂະນະທີ່ຂ້າພະເຈົ້າອາດຈະໃຊ້ເວລາພັກທີ່ສົມເຫດສົມຜົນໂດຍບໍ່ມີຄ່າຈ້າງສໍາລັບກິດຈະກໍາດັ່ງກ່າວ, ຜູ້ຈັດການຂອງຂ້າພະເຈົ້າຕ້ອງອະນຸມັດ. ຂ້າພະເຈົ້າເຂົ້າໃຈວ່າ Celestica ຈະບໍ່ຈ່າຍໃຫ້ຂ້າພະເຈົ້າສໍາລັບເວລາທີ່ໃຊ້ສໍາລັບການປະຈໍາການ, ການເຮັດໜ້າທີ່ເປັນເຈົ້າໜ້າທີ່ທີ່ໄດ້ຮັບເລືອກຕັ້ງ ຫຼືການໂຄສະນາຫາສຽງສໍາລັບຜູ້ສະ
ໝັກທາງການເມືອງ

## ຂ້າພະເຈົ້າປົກປ້ອງສິ່ງແວດລ້ອມ

ພວກເຮົາທຸກຄົນມີໜ້າທີ່ຕ້ອງປະຕິບັດໃນການປົກປ້ອງສິ່ງແວດລ້ອມ. ຂ້າພະເຈົ້າປະຕິບັດຕາມທຸກມາດຕະຖານດ້ານສິ່ງແວດລ້ອມ ເຊັ່ນດຽວກັນກັບນະໂຍບາຍດ້ານສິ່ງແວດລ້ອມຂອງ Celestica. ຖ້າຂ້າພະເຈົ້າພົບເຫັນການລະເມີດກົດໝາຍສິ່ງແວດລ້ອມ ຫຼືການດໍາເນີນການໃດໆທີ່ເຮັດໃຫ້ຂ້າພະເຈົ້າກັງວົນໃຈ, ຂ້າພະເຈົ້າຈະລາຍງານໃນທັນທີ.

## ຂ້າພະເຈົ້າປົກປ້ອງຊື່ສຽງຂອງ Celestica ໃນນາມເປັນພົນລະເມືອງທີ່ດີ

ຂ້າພະເຈົ້າມຸ່ງໝັ້ນປະພຶດຕົນຢ່າງມີຈັນຍາບັນ ທັງຢູ່ນອກ ແລະ ໃນຫ້ອງການ ຂອງພວກເຮົາ ແລະ ຮ່ວມມືກັບຫຸ້ນສ່ວນຂອງພວກເຮົາເພື່ອຮັບປະກັນວ່າທຸລະກິດຖືກດໍາເນີນຢ່າງຍຸຕິທໍາ ແລະ ມີຈັນຍາບັນ. ໃນນາມເປັນສະມາຊິກຂອງພັນທະມິດດໍາເນີນທຸລະກິດຢ່າງມີຄວາມຮັບຜິດຊອບ, (RBA) ພວກເຮົາສະໜັບສະໜູນ ແລະ ສົ່ງເສີມຫຼັກປະຕິບັດຮ່ວມກັນສໍາລັບອຸດສາຫະກໍາອີເລັກໂຕຼນິກ. ໂດຍຮ່ວມກັບ (RBA) ແລະ ບັນດາສະມາຊິກ, ພວກເຮົາກໍາລັງເຮັດວຽກເພື່ອປັບປຸງສິ່ງແວດລ້ອມ ແລະ ສະພາບການເຮັດວຽກໃນອຸດສາຫະກໍາຂອງພວກເຮົາ. ພວກເຮົາວັດແທກການປະຕິບັດຕາມຫຼັກ ປະຕິບັດຂອງ (RBA) ຜ່ານການປະສົມປະສານລະຫວ່າງການປະ ເມີນຜົນກວດກາພາຍໃນ ແລະ ພາຍນອກ.

**ການລະເມີດກົດລະບຽບສິ່ງແວດລ້ອມຄື...**

Sarah ຮັບຜິດຊອບການຈັດການ ແລະ ການກໍາຈັດຖິ້ມສິ່ງ ເສດເຫຼືອທີ່ເປັນອັນຕະລາຍຢ່າງເໝາະ
ສົມຢູ່ Celestica. ລາວຮູ້ວ່ານີ້ແມ່ນບັນຫາທີ່
ມີຄ່າໃຊ້ຈ່າຍແພງຫຼາຍ - ມັນຈະງ່າຍກວ່າ ແລະ ປະຢັດກວ່າບໍ່ຖ້າຫາກເຖສິ່ງເສດເຫຼືອ
ລົງຮ່ອງລະບາຍນໍ້າ? ມື້ມື້ໜຶ່ງ, Sarah ໄດ້ເຮັດແບບນັ້ນ.
ໂດຍການບໍ່ກໍາຈັດສິ່ງເສດເຫຼືອທີ່ເປັນອັນຕະລາຍຢ່າງຖືກຕ້ອງ, Sarah ໄດ້ລະເມີດກົດລະບຽບວ່າດ້ວຍສິ່ງແວດລ້ອມ
ແລະ ເຮັດໃຫ້ລະບົບສະໜອງນໍ້າມີຄວາມສ່ຽງທີ່ຮ້າຍແຮງ.

# ການປົກປ້ອງຊັບສິນຂອງພວກເຮົາ

ຕົວຢ່າງຂອງຂໍ້ມູນກ່ຽວກັບຊັບສິນ ແລະ ເປັນຄວາມລັບ

- ແຜນທຸລະກິດ, ການເງິນ, ການຕະຫຼາດ ແລະ ການບໍລິການ
- ຂໍ້ມູນພະນັກງານ ເຊັ່ນວ່າ: ຂໍ້ມູນເງິນເດືອນ ຫຼືບັນທຶກທາງການແພດ
- ລາຍຊື່ລູກຄ້າ
- ຂໍ້ມູນລູກຄ້າທີ່ມີຢູ່ ຫຼືທີ່ເປັນໄປໄດ້
- ລິຂະສິດ, ສິດທິບັດ, ຄວາມລັບທາງການຄ້າ, ຂະບວນການຜະລິດ ຫຼືຊອບແວຣ

ວິທີທີ່ຂ້າພະເຈົ້າສາມາດຊ່ວຍປົກປ້ອງຂໍ້ມູນກ່ຽວກັບຊັບສິນ ແລະ ເປັນຄວາມລັບ

- ຢ່າເປີດເຜີຍຂໍ້ມູນລັບກັບຜູ້ໃດທີ່ຢູ່ນອກ Celestica ໂດຍບໍ່ໄດ້ຮັບການອະນຸຍາດ
- ເປີດເຜີຍຂໍ້ມູນລັບຕໍ່ກັບພະນັກງານອື່ນເພື່ອຈຸດປະສົງທາງທຸ ລະກິດທີ່ຖືກກົດໝາຍ ແລະ ຕາມ ຄວາມຈໍາເປັນຕ້ອງຮູ້ເທົ່ານັ້ນ
- ຮັກສາທຸກຂໍ້ມູ ນໃຫ້ເປັນຄວາມລັບ ຖ້າເປີດເຜີຍອາດຈະເປັນປະໂຫຍດຕໍ່ ກັບຄູ່ແຂ່ງ ຫຼືເປັນຜົນເສຍຫາຍຕໍ່ກັບ Celestica
- ເກັບມ້ຽນເອກະສານທີ່ອ່ອນໄຫວໄວ້ໃນແຟ້ມ ຫຼືລີ້ນຊັກທີ່ມີການລັອກໄວ້ຄັກແນ່
- ຂໍ້ມູນທີ່ເປັນຄວາມລັບທີ່ສົ່ງທາງອີເລັກໂທຣນິກອາດຈະຈໍາເປັນຕ້ອງເຂົ້າລະຫັດກ່ອນທີ່ຈະສົ່ງ. ຖ້າຫາກຕ້ອງໃຊ້ຂໍ້ຄວາມລະຫັດຜ່ານເພື່ອເຂົ້າລະຫັດ, ແມ່ນໃຫ້ສົ່ງຂໍ້ຄວາມລະຫັດຜ່ານດັ່ງກ່າວ ຫາຜູ້ຮັບໃນອີເມວຕ່າງຫາກ.

ຢູ່ Celestica, ພວກເຮົາທຸກຄົນມີຄວາມຮັບຜິດຊອບປົກປ້ອງຊັບສິນ ແລະ ຂໍ້ມູນທີ່ມອບໝາຍໃຫ້ພວກເຮົາບໍ່ໃຫ້ສູນເສຍ, ເສຍຫາຍ, ນໍາໃຊ້ໃນທາງທີ່ຜິດ ຫຼືຖືກລັກ. ຂ້າພະເຈົ້າບໍ່ເຄີຍໃຊ້ຊັບສິນ ຫຼືຂໍ້ມູນຂອງ Celestica ເພື່ອຈຸດປະສົງທີ່ລະເມີດກົດໝາຍ ຫຼືນະໂຍບາຍຂອງບໍລິສັດ.

## ຂ້າພະເຈົ້າເຄົາລົບ ແລະ ປົກປ້ອງຊັບສິນຂອງພວກເຮົາ

ຂ້າພະເຈົ້າເຂົ້າໃຈວ່າ ຊັບສິນຂອງ Celestica ເຊັ່ນວ່າ: ເງິນທຶນ, ຜະລິດຕະພັນ, ອຸປະກອນ, ລະບົບ, ສິ່ງອໍານວຍຄວາມສະດວກ ແລະ ເຄື່ອງຮັບໃຊ້ຕ່າງໆ ຄວນຖືກໃຊ້ພຽງແຕ່ສໍາລັບວຽກງານ ແລະ ຈຸດປະສົງອື່ນທີ່ໄດ້ຮັບອະນຸມັດໂດຍຄະນະຜູ້ບໍລິຫານເທົ່ານັ້ນ. ຂ້າພະເຈົ້າຮັບຜິດຊອບລາຍງານການລັກ, ການສູນເສຍ ຫຼືການໃຊ້ຊັບສິນບໍລິສັດໃນທາງທີ່ບໍ່ຖືກຕ້ອງ ໃຫ້ຜູ້ຈັດການຂອງຂ້າພະເຈົ້າ ຫຼືຝ່າຍຮັກສາຄວາມປອດໄພປະຈໍາສະຖານທີ່ຮັບຊາບໃນທັນທີ. ຂ້າພະເຈົ້າບໍ່ພົວພັນໃນກິດຈະກໍາສ່ວນຕົວໃນລະຫວ່າງຊົ່ວໂມງເຮັດວຽກ ເຊັ່ນວ່ າ: ການໃຊ້ໂທລະສັບ, ອີເມວສ່ວນຕົວຫຼາຍເກີນໄປ ຫຼືການໃຊ້ເຄື່ອງມືເຄືອຂ່າຍສັງຄົມອອນລາຍທີ່ສົ່ງຜົນໃຫ້ຂ້າພະເຈົ້າປະຕິບັດຄວາມຮັບຜິດຊອບໜ້າ
ວຽກຂອງຂ້າພະເຈົ້າໃຫ້ສໍາເລັດ. ຂ້າພະເຈົ້າບໍ່ເຄີຍໃຊ້ຄອມພິວເຕີ, ລະບົບອີເມວ ຫຼືອຸປະກອນຂອງບໍລິສັດສໍາລັບຈຸດ
ປະສົງທຸລະກິດທາງນອກ ຫຼືສໍາລັບກິດຈະກໍາທີ່ຜິດກົດໝາຍ ຫຼືຜິດຈັນຍາບັນ ເຊັ່ນວ່ າ: ການເບິ່ງ, ສ້າງ, ເກັບມ້ຽນ ຫຼືສົ່ງເນື້ອຫາທີ່ຜູ້ອື່ນອາດຈະເຫັນວ່າບໍ່ເໝາະສົມ, ຫຍາບຄາຍ ຫຼືໜ້າລັງກຽດ. ຂ້າພະເຈົ້າເຂົ້າໃຈວ່າທຸກຊັບສິນຂອງບຸກຄົນທີສາມ, ລວມທັງ ແຕ່ບໍ່ຈໍາກັດພຽງແຕ່ ຊອບແວຣ ອາດຈະໄດ້ຮັບໃບອະນຸຍາດ ຫຼືຊື້ຜ່ານອົງການຄຸ້ມຄອງຕ່ອງໂສ້ອຸປະທານເທົ່ານັ້ນ. ພະນັກງານຕ້ອງຄຸ້ນເຄີຍກັບ ນະໂຍບາຍວ່າດ້ວຍການໃຊ້ທີ່ຍອມຮັບໄດ້ (AUP) ຂອງ Celestica ທີ່ກ່ຽວຂ້ອງກັບການໃຊ້ຊັບພະຍາກອນຂໍ້ມູນຂ່າວສານຂອງ Celestica. ພະນັກງານຄວນຕິດຕໍ່ຫາຜູ້ຈັດການຝ່າຍຮັກສາຄວາມປອດໄພຂໍ້ມູນທົ່ວໂລກ ຖ້າມີຄໍາຖາມຕ່າງໆທີ່ກ່ຽວຂ້ອງກັບນະໂຍບາຍນີ້.

ຕົວຢ່າງຂອງຊັບສິນ:

- ເງິນຂອງບໍລິສັດ
- ຜະລິດຕະພັນຂອງບໍລິສັດ
- ເຄື່ອງໃຊ້ໃນຫ້ອງການ
- ເວລາເຮັດວຽກ ແລະ ຜົນການເຮັດວຽກຂອງພະນັກງານ
- ລະບົບຮາດແວ ແລະ ຊອບແວຄອມພິວເຕີ
- ໂທລະສັບ
- ອຸປະກອນສື່ສານໄຮ້ສາຍ
- ເຄື່ອງອັດເອກະສານ ແລະ ເຄື່ອງແຟັກ
- ພາຫານະຂອງບໍລິສັດ
- ເຄື່ອງໝາຍການຄ້າຂອງບໍລິສັດ



## ຂ້າພະເຈົ້າເຄົາລົບຄວາມເປັນສ່ວນຕົວ ແລະ ປົກປ້ອງຂໍ້ມູນທີ່ເປັນຄວາມລັບ ແລະ ກ່ຽວກັບຊັບສິນ

ຢູ່ Celestica, ພວກເຮົາເຄົາລົບຄວາມເປັນສ່ວນຕົວຂອງເພື່ອນຮ່ວມງານ, ຫຸ້ນສ່ວນທຸລະກິດ, ລູກຄ້າ ແລະ ຜູ້ສະໜອງສິນຄ້າ. ໃນຊີວິດເຮັດວຽກປະຈຳວັນຂອງຂ້າພະເຈົ້າ, ຂ້າພະເຈົ້າອາດຈະພົບເຫັນຂໍ້ມູນບຸກຄົນ ແລະ ທຸລະກິດກ່ຽວກັບເພື່ອນຮ່ວມງານຂອງຂ້າພະເຈົ້າ, ລູກຄ້າ, ຜູ້ສະໜອງສິນຄ້າ ຫຼື Celestica. ຂໍ້ມູນນີ້ແມ່ນເປັນຄວາມລັບ ແລະ ກ່ຽວກັບຊັບສິນ, ແລະ ມັນແມ່ນຄວາມຮັບຜິດຊອບຂອງຂ້າພະເຈົ້າໃນການປົກປ້ອງມັນ ໂດຍການໝາຍມັນຢ່າງເໝາະສົມ, ຮັກສາມັນໄວ້ໃຫ້ປອດໄພ ແລະ ຈຳກັດການເຂົ້າເຖິງໃຫ້
ແຕ່ຜູ້ທີ່ຕ້ອງການມັນເພື່ອເຮັດໜ້າວຽກຂອງເຂົາເຈົ້າເທົ່ານັ້ນ. ຂ້າພະເຈົ້າເກັບເອົາ, ໃຊ້ ແລະ ປະມວນຜົນຂໍ້ມູນນີ້ເພື່ອຈຸດປະສົງທາງທຸລະກິດເທົ່ານັ້ນ. ຂ້າພະເຈົ້າດຳເນີນການເກັບກຳຂໍ້ມູນບຸກຄົນຢ່າງມີຄວາມຮັບຜິດຊອບ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ ແລະ ວິທີປະຕິບັດທີ່ດີສຸດຂອງອຸດສາຫະກຳ, ແລະ ເອົາໃຈໃສ່ປ້ອງກັນການເປີດເຜີຍທີ່ບໍ່ໄດ້ຮັບອະນຸຍາດ. ພັນທະໃນການປົກປ້ອງຄວາມລັບຂອງຂໍ້ມູນກ່ຽວກັບຊັບສິນຂອງ Celestica ເຖິງແມ່ນຫາວ່າ ຫຼັງຈາກທີ່ການຈ້າງງານຂອງຂ້າພະເຈົ້າສິ້ນສຸດແລ້ວ.

## ຂ້າພະເຈົ້າຮູ້ວ່າ Celestica ເຄົາລົບຄວາມເປັນສ່ວນຕົວຂອງຂ້າພະເຈົ້າ

ໃນການດຳເນີນທຸລະກິດປົກກະຕິ, Celestica ເກັບເອົາ ແລະ ຮັກສາຂໍ້ມູນບຸກຄົນກ່ຽວກັບພະນັກງານທີ່ກ່ຽວຂ້ອງກັບວຽກ ຫຼືວຽກທີ່ເປັນໄປໄດ້ຂອງພວກເຮົາກັບ Celestica. ຂ້າພະເຈົ້າສະບາຍໃຈທີ່ຮູ້ວ່າການເຂົ້າເຖິງຂໍ້ມູນຂອງຂ້າພະເຈົ້າຖືກຈຳກັດສະເພາະພາຍໃນໃຫ້ແຕ່ບຸກຄົນທີ່ມີຄວາມຈຳເປັນຕ້ອງຮູ້ທາງທຸລະກິດເທົ່ານັ້ນ. ຂ້າພະເຈົ້າເຂົ້າໃຈວ່າຂໍ້ມູນບຸກຄົນຂອງຂ້າພະເຈົ້າອາດຈະຖືກໂອນຢູ່ພາຍໃນປະເທດ ແລະ ລະຫວ່າງປະເທດເພື່ອຈຸດປະສົງທາງທຸລະກິດທີ່ຖືກກົດໝາຍ. ຂ້າພະເຈົ້າຮູ້ວ່າຂໍ້ມູນບຸກຄົນຂອງຂ້າພະເຈົ້າອາດຈະຖືກເປີດເຜີຍກັບບຸກຄົນທີສາມພຽງແຕ່ເມື່ອມີການຍິນຍອມເຫັນດີຂອງຂ້າພະເຈົ້າເທົ່ານັ້ນ, ຍົກເວັ້ນໃນກໍລະນີບ່ອນທີ່ມີການເປີດເຜີຍນັ້ນແມ່ນເພື່ອການບໍລິຫານແຜນຜົນປະໂຫຍດ ຫຼືຂໍ້ກຳນົດເພື່ອປະຕິບັດຕາມການສືບສວນທີ່ຖືກຕ້ອງຕາມກົດໝາຍ ຫຼືຂໍ້ກຳນົດຂອງກົດໝາຍເທົ່ານັ້ນ.

### ການເປີດເຜີຍມູນລັບ ແລະ ກ່ຽວກັບຊັບສິນ ຢ່າງບໍ່ເໝາະສົມຄື...

ຜູ້ທີ່ຈະມາເປັນລູ ກ
ຄ້າທີ່ເປັນໄປໄດ້ໄດ້ຮ້ອງຂໍໃຫ້ Celestica ສົ່ງໃບສະເໜີລາຄາຕໍ່ກັບຜະ
ລິດຕະພັນບໍລິໂພກໃໝ່ ຂອງບໍລິສັດ. ລະຫວ່າງການຢ້ຽມຊົມສະຖານທີ່ຜະລິດ
, ລູກຄ້າບອກ Mary ກ່ຽວກັບຜະລິດຕະພັນທີ່ຈະເປີດຕົວໃນໄວໆນີ້ ເຊິ່ງ Mary ຄິດວ່າແມ່ນຜະລິດຕະພັນທີ່ປະຕິວັດໃໝ່ຢ່າງແທ້ຈິງ. ດ້ວຍຄວາມຕື່ນເຕັ້ນ, ລາວໄດ້ບອກເພື່ອນຂອງລາວ ເຊິ່ງເປັນນັກຂ່າວດ້ານເຕັກໂນໂລຊີ ກ່ຽວກັບຜະລິດຕະພັນນັ້ນ. ໃນການເປີດເຜີຍຂໍ້ມູນນັ້ນ, Mary ໄດ້ລະເມີດພັນທະການຮັກສາຄວາມລັບຂອງລາວ ແລະ ອາດຈະກະທົບກັບການເປີດຕົວຜະລິດຕະພັນນັ້ນ.

### ການບໍ່ສາມາດປົກປ້ອງຂໍ້ມູນຂອງລູກຄ້າມີ...

Dean ລັບຂອງອີງການກ່ຽວກັບ ລູກຄ້າຂອງ Celestica ແລະ ໂດຍປົກກະຕິແລ້ວ
 ຈະ
ລະມັດລະວັງທີ່ສຸດເພື່ອຮັບປະກັນວ່າ ແຟ້ມເອກະສານ ຂອງລາວແມ່ເອົາໄວ້ໃນລິ້ນຊັກທີ່ມີການລັອກໄວ້ຄັກແນ່ກ່ອນທີ່ລາວຈະອອກຈາກຫ້ອງການ. ຕອນແລງວັນໜຶ່ງ, Dean ຟ້າວໄປເບິ່ງການສະແດງຟ້ອນຂອງລູກສາວ ຂອງລາວ ແລະ ໄດ້ປະແຟ້ມເອກະສານທີ່ປະກອບມີລາຍຊື່ຂອງລູກຄ້າໄວ້ເທິງໂຕະຂອງລາວ ໂດຍບໍ່ຕັ້ງໃຈ. Dean ລະເລີຍໜ້າທີ່ຂອງລາວໃນການປົກປ້ອງຂໍ້ມູນທີ່ບໍ່ເປີດເຜີຍຕໍ່ສາທາລະນະຂອງລູກຄ້າຂອງລາວ.

# ການປະຕິບັດກົດໝາຍ, ຄວາມຮັບຜິດຊອບ ແລະ ການລະເມີດສ່ວນບຸກຄົນ

### ການເປີດເຜີຍຂໍ້ມູນ ທີ່ບໍ່ເໝາະສົມຄື...

Scott ຕື່ນເຕັ້ນທີ່ໄດ້ຍິນວ່າ ຜົນປະກອບການປະຈໍາ ໄຕມາດຂອງ Celestica ແມ່ນດີຂຶ້ນ ຫຼາຍໃນສາມໄຕມາດສຸດທ້າຍ. ດ້ວຍ ຄວາມພາກພູມໃຈ ແລະ ຕື່ນເຕັ້ນ, ລາວ ໄດ້ໂທຫາພໍ່ແມ່ຂອງລາວ ແລະ ແນະນໍາໃຫ້ພວກເຂົາຊື້ຫຸ້ນໃນບໍລິສັດ ຫຼາຍຂຶ້ນ. ການປະກາດຜົນປະກອບການ ປະຈໍາໄຕມາດຕໍ່ສາທາລະນະແມ່ນຈະມີ ຂຶ້ນໃນອີກໜຶ່ງ ອາທິດ. Scott ໄດ້ເປີດ ເຜີຍຂໍ້ມູນສໍາຄັນຢ່າງບໍ່ເໝາະສົມ.

ໃນນາມເປັນອົງການຈັດຕັ້ງລະດັບໂລກ, ບໍລິສັດຂອງພວກເຮົາຂຶ້ນກັບຫຼາຍໆກົດໝາຍ, ກົດລະບຽບ ແລະ ຂໍ້ບັງຄັບ ແລະ ພວກເຮົາມຸ່ງໝັ້ນປະຕິບັດຕາມກົດລະບຽບຕ່າງໆ ຢູ່ທຸກບ່ອນທີ່ພວກເຮົາເຮັດທຸລະກິດ . ໃນນາມເປັນພະນັກງານ Celestica, ຂ້າພະເຈົ້າບໍ່ຖືກຄາດຫວັງໃຫ້ເປັນຜູ້ຊ່ຽວຊານດ້ານກົດໝາຍ, ແຕ່ ຂ້າພະເຈົ້າຄວນເຂົ້າໃຈ ແລະ ປະຕິບັດຕາມກົດໝາຍ, ກົດລະບຽບ ແລະ ຂໍ້ບັງຄັບທີ່ນໍາໃຊ້ກັບຕໍາແໜ່ງຂອງ ຂ້າພະເຈົ້າ ແລະ ຮູ້ວ່າເວລາໃດຄວນຂໍຄໍາແນະນໍາ.

## ຂ້າພະເຈົ້າເຂົ້າໃຈຄວາມຮັບຜິດຊອບຂອງຂ້າພະເຈົ້າໃນນາມເປັນ ພະນັກງານບໍລິສັດມະຫາຊົນ

ບັນດາບໍລິສັດມະຫາຊົນ ເຊັ່ນ Celestica ແມ່ນມີພັນທະທາງກົດໝາຍ ແລະ ຕາມລະບຽບການສະເພາະ. ໃນຖານະເປັນພະນັກງານຂອງ Celestica, ຂ້າພະເຈົ້າມີການເຂົ້າເຖິງຂໍ້ມູນລັບທີ່ສາມາດມີຜົນ ກະທົບຕໍ່ກັບລາຄາຫຸ້ນຂອງ Celestica ແລະ ຍັງບໍ່ທັນເປີດເຜີຍຕໍ່ກັບສາທາລະນະເທື່ອ ເຊັ່ນວ່າ: ການດັດແກ້ການຄາດຄະເນລາຍໄດ້, ຜົນຮັບທາງການເງິນ, ການປັບໂຄງສ້າງໃໝ່, ການລວມບໍລິສັດ ແລະ ການຊື້ກິດຈະການ, ການປ່ຽນແປງຜູ້ບໍລິຫານ ຫຼືຜະລິດຕະພັນໃໝ່. ນີ້ອາດຈະລວມເອົາຂໍ້ມູນທີ່ ກ່ຽວຂ້ອງກັບຫຸ້ນຂອງບໍລິສັດມະຫາຊົນອື່ນ. ຂໍ້ມູນນີ້ສາມາດຖືວ່າເປັນສິ່ງທີ່ເອີ້ນວ່າ "ຂໍ້ມູນສໍາຄັນ". ຂ້າພະເຈົ້າເຂົ້າໃຈວ່າ ຂ້າພະເຈົ້າບໍ່ຄວນເປີດເຜີຍ ຫຼືໃຊ້ "ຂໍ້ມູນສໍາຄັນ" ກ່ຽວກັບ Celestica ເພື່ອຜົນປະ ໂຫຍດທາງການເງິນຂອງຂ້າພະເຈົ້າເອງ ຫຼືຂອງຄົນອື່ນ ລວມທັງໝູ່ເພື່ອນ ແລະ ຄອບຄົວ.

ນອກນັ້ນ ຂ້າພະເຈົ້າຍັງເຂົ້າໃຈວ່າ ມັນຜິດກົດໝາຍໃນການຊື້, ຂາຍ ຫຼືແນະນໍາໃຫ້ຜູ້ອື່ນຊື້ ຫຼືຂາຍຫຼັກຊັບ ຂອງບໍລິສັດໃດໆກໍ່ຕາມ ລວມທັງ Celestica, ໃນເວລາທີ່ຂ້າພະເຈົ້າຮູ້ "ຂໍ້ມູນສໍາຄັນ" ທີ່ຍັງບໍ່ເປີດເຜີຍ ກ່ຽວກັບບໍລິສັດນັ້ນ. ນອກຈາກການຖືກຫ້າມບໍ່ໃຫ້ຊື້ຂາຍຫຸ້ນຂອງ Celestica ແລ້ວ, ບາງຄັ້ງ ຂ້າພະ ເຈົ້າອາດຈະຖືກຫ້າມບໍ່ໃຫ້ຊື້ - ຂາຍຫຸ້ນຂອງບໍລິສັດໃດໜຶ່ງທີ່ Celestica ເຮັດທຸລະກິດນໍາ. ຕົວຢ່າງ: ຖ້າຂ້າພະເຈົ້າຮູ້ວ່າ Celestica ຢູ່ໃນຂະບວນການຊື້ກິດຈະການຂອງບໍລິສັດໃດໜຶ່ງ, ຂ້າພະເຈົ້າບໍ່ ສາມາດ ຊື້ - ຂາຍ ຊື້ຂາຍຫຼັກຊັບຂອງບໍລິສັດນັ້ນໄດ້ຈົນກວ່າມີການເປີດເຜີຍຂໍ້ມູນຕໍ່ສາທາລະນະ.

ເມື່ອມີຂໍ້ສົງໄສ, ຂ້າພະເຈົ້ າຈະສຶກສາ ນະໂຍບາຍວ່າດ້ວຍການເປີດເຜີຍຂອງບໍລິສັດ ແລະ ນະໂຍບາຍການຊື້ - ຂາຍຂອງຄົນວົງໃນ ຫຼື ອີເມລ໌ complaince@celestica.com

ນອກຈາກຂໍ້ຈໍາກັດດ້ານກົດໝາຍກ່ຽວກັບການຊື້-ຂາຍຂອງຄົນວົງໃນແລ້ວ, ຂ້າພະເຈົ້າເຂົ້າໃຈວ່າ Celestica ອາດຈະນໍາໃຊ້ນະໂຍບາຍຕ່າງໆຕາມການຕັດສິນໃຈຂອງຕົນ ເພື່ອຈໍາກັດຄວາມສາມາດຂອງ ຂ້າພະເຈົ້າໃນການຊື້ -ຂາຍຫຼັກຊັບຂອງ Celestica ເປັນໄລຍະເວລາທີ່ກໍານົດໄວ້. ຂ້າພະເຈົ້າເຂົ້າໃຈວ່າ ມັນແມ່ນໜ້າທີ່ຮັບຜິດຊອບຂອງຂ້າພະເຈົ້າໃນການປະຕິບັດຕາມນະໂຍບາຍເຫຼົ່ານີ້.



## ຂ້າພະເຈົ້າພູມໃຈທີ່ໄດ້ເຮັດວຽກໃນສະພາບແວດລ້ອມທີ່ປອດໄພ ແລະ ມີຈັນຍາບັນ

Celestica ມຸ່ງໝັ້ນສະໜອງສະພາບແວດລ້ອມການເຮັດວຽກທີ່ປອດໄພ ແລະ ມີຈັນຍາບັນສໍາລັບພວກເຮົາທຸກຄົນ. ຂ້າພະເຈົ້າສະບາຍໃຈໃນການຮູ້ວ່າບໍລິສັດຂອງພວກເຮົາ:

- ຈ່າຍເງິນໃຫ້ພະນັກງານທຸກຄົນຢ່າງໜ້ອຍຕາມອັດຕາຄ່າຈ້າງຕໍ່າສຸດທີ່ກົດໝາຍທ້ອງຖິ່ນກໍານົດໄວ້
- ສະໜອງທຸກຜົນປະໂຫຍດທີ່ມີສິດໄດ້ຮັບຕາມກົດໝາຍໃຫ້ແກ່ພະນັກງານທຸກຄົນ
- ຮັບປະກັນວ່າບໍ່ມີການບັງຄັບ, ຜູກມັດ ຫຼື ຈອງຈໍາໃຊ້ແຮງງານ
- ປະຕິບັດຕາມຂໍ້ກໍານົດເກນອາຍຸຕໍ່າສຸດສໍາລັບການຈ້າງງານ

## ຂ້າພະເຈົ້າປະຕິບັດຕາມການຄວບຄຸມດ້ານການຄ້າລະຫວ່າງປະເທດ

ເມື່ອຂ້າພະເຈົ້າປະຕິບັດ ຫຼືມີສ່ວນກ່ຽວຂ້ອງໃນກິດຈະກໍາການນໍາເຂົ້າ ແລະ ການສົ່ງອອກໃນນາມເປັນພະນັກງານຂອງ Celestica, ຂ້າພະເຈົ້າມີໜ້າທີ່ສ້າງຄວາມຄຸ້ນເຄີຍ ແລະ ປະຕິບັດຕາມທຸກກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງ ລວມທັງການປະຕິບັດຕາມລະບຽບຂັ້ນຕອນການໃຫ້ອະນຸຍາດ, ການຂົນສົ່ງ, ການບັນທຶກເອກະສານ, ການລາຍງານ ແລະ ການຮັກສາບັນທຶກຢ່າງຖືກຕ້ອງ. ຂ້າພະເຈົ້າມຸ່ງໝັ້ນປະຕິບັດຕາມທຸກການຄວບຄຸມດ້ານການຄ້າພາຍໃນປະເທດ ແລະ ລະຫວ່າງປະເທດຢູ່ຕະຫຼອດເວລາ. ເມື່ອຂ້າພະເຈົ້າມີຂໍ້ສົງໄສກ່ຽວກັບບັນຫາການນໍາເຂົ້າ ຫຼືການສົ່ງອອກ, ຂ້າພະເຈົ້າຮູ້ວ່າຂ້າພະເຈົ້າສາມາດເບິ່ງນະໂຍບາຍ ແລະ ຂັ້ນຕອນການນໍາເຂົ້າ/ການສົ່ງອອກຂອງ Celestica ຫຼືຂໍຄໍາແນະນໍາຈາກທີມງານພາຍໃນ ແລະ ພາຍນອກຂອງພວກເຮົາຜູ້ທີ່ເຮັດວຽກໃນຂົງເຂດທີ່ຊັບຊ້ອນນີ້.

## ຂ້າພະເຈົ້າເຂົ້າໃຈຜົນຕາມມາຂອງການບໍ່ປະຕິບັດຕາມ

ພວກເຮົາທຸກຄົນຮັບຜິດຊອບຕໍ່ການປະຕິບັດຕາມກົດໝາຍ ເຊັ່ນດຽວກັນກັບນະໂຍບາຍຂອງ Celestica ລວມທັງນະໂຍບາຍ BCG. ຂ້າພະເຈົ້າເຂົ້າໃຈວ່າ ຖ້າຂ້າພະເຈົ້າບໍ່ສາມາດປະຕິບັດຕາມ, Celestica ອາດ ຈະປະຕິບັດວິໄນຕໍ່ກັບຂ້າພະເຈົ້າ ເຖິງຂັ້ນໄລ່ອອກວຽກໃນທັນທີ. ໃນບາງກໍລະນີເມື່ອການປະພຶດຂອງຂ້າພະເຈົ້າລະເມີດນະໂຍບາຍ BCG, ມັນກໍ່ຍັງລະເມີດກົດໝາຍນໍາອີກ. ຂ້າພະເຈົ້າເຂົ້າໃຈວ່າ ການລະເມີດເຫຼົ່ານີ້ອາດຈະເຮັດໃຫ້ຂ້າພະເຈົ້າຖືກດໍາເນີນຄະດີ, ຈໍາຄຸກ ແລະ ປັບໃໝ. ຂ້າພະເຈົ້າເຂົ້າໃຈວ່າ Celestica ຈະໃຫ້ການຮ່ວມມືຢ່າງເຕັມສ່ວນກັບໜ່ວຍງານທີ່ເໝາະສົມໃນເວລາມີການລະເມີດ ກົດໝາຍ. ຍິ່ງກວ່ານັ້ນ, ຂ້າພະເຈົ້າເຂົ້າໃຈວ່າ Celestica ມີສິດຮຽກຮ້ອງເອົາການແກ້ໄຂຈາກບຸກຄົນ ຫຼືນິຕິບຸກຄົນທີ່ຮັບຜິດຊອບ ເມື່ອບໍລິສັດປະສົບກັບຄວາມເສຍຫາຍ.

**ການລະເມີດການຄວບຄຸມທາງການຄ້າຄື...**

John ກໍາລັງປະກອບເອກະສານກ່ຽວກັບຫຼາຍໆກ່ອງສິນຄ້າທີ່ມີກໍານົດເວລາຈັດສົ່ງໄປຕ່າງປະເທດ ແລະ ຟ້າວ ຟັ່ງເຮັດສໍາເລັດການຈັດສົ່ງນີ້. ລາວບໍ່ໄດ້ຢືນຢັນວ່າ ປະເທດຕົ້ນກໍາເນີດ (COO) ແມ່ນຖືກຕ້ອງແລ້ວບໍກ່ອນການຈັດສົ່ງ, ແລະ ຜົນຕາມມາແມ່ນຂໍ້ມູນບໍ່ຖືກຕ້ອງ. ເອກະສານທີ່ບໍ່ຖືກຕ້ອງຂອງ John ໄດ້ລະເມີດກົດລະບຽບການນໍາເຂົ້າ/ການສົ່ງອອກ.

# ການແຈ້ງບອກ ຫຼືການຮ້ອງຂໍຄວາມຊ່ວຍເຫຼືອ

## ຂ້າພະເຈົ້າເຂົ້າໃຈໜ້າທີ່ຂອງຂ້າພະເຈົ້າໃນການລາຍງານການລະເມີດ

ຂ້າພະເຈົ້າມີພັນທະສະໜັບສະໜູນມາດຕະຖານດ້ານຈັນຍາບັນຂອງ Celestica ແລະ ບໍລິສັດຂອງພວກເຮົາມຸ່ງໝັ້ນສະໜອງຄໍາແນະນໍາທີ່ຂ້າພະເຈົ້າຕ້ອງການໃຫ້ແກ່ຂ້າພະເຈົ້າ, ຕອບຄໍາຖາມຂອງຂ້າພະເຈົ້າ ແລະ ໃຫ້ທາງເລືອກຫຼາຍຢ່າງໃນການລາຍງານ. ເມື່ອຂ້າພະເຈົ້າມີສ່ວນພົວພັນໃນ ຫຼືພົບເຫັນພຶດຕິກໍາທີ່ເຮັດໃຫ້ຂ້າພະເຈົ້າກັງວົນໃຈ ຫຼືຂ້າພະເຈົ້າສົງໄສການລະເມີດກົດໝາຍ, ນະໂຍບາຍ BCG ຫຼືນະໂຍບາຍອື່ນຂອງ Celestica, ຂ້າພະເຈົ້າຍົກບັນຫາ ດັ່ງກ່າວຂຶ້ນ ໃນທັນທີກັບຜູ້ຈັດການຂອງຂ້າພະເຈົ້າ, ອີເມລ complaince@celestica.com ຫຼື ຕິດຕໍ່ ສາຍດ່ວນເລື່ອງຈັນຍາບັນ.
ຂ້າພະເຈົ້າຮູ້ວ່າການເຮັດແບບນັ້ນ ອະນຸຍາດໃຫ້ Celestica ຈັດການກັບບັນຫາ ແລະ ແກ້ໄຂມັນ, ດີທີ່ສຸດ ກ່ອນທີ່ມັນຈະກາຍເປັນການລະເມີດກົດໝາຍ ຫຼືເປັນຄວາມສ່ຽງຕໍ່ກັບສຸຂະພາບ, ຄວາມປອດໄພ ຫຼືຊື່ສຽງຂອງບໍລິສັດຂອງພວກເຮົາ.

ນະໂຍບາຍ BCG ມີຈຸດປະສົງເຮັດໜ້າທີ່ເປັນຂໍ້ແນະນໍາສໍາລັບການກະທໍາ ແລະ ການຕັດສິນໃຈຂອງພວກເຮົາ. ແຕ່ການຕັດສິນໃຈ ຫຼືສະພາບການທີ່ກ່ຽວພັນກັບບັນຫາກົດໝາຍ
ຫຼືຈັນຍາບັນມັກຈະສັບສົນ ແລະ ບາງຄັ້ງກໍ່ບໍ່ຈະແຈ້ງ. ນັ້ນແມ່ນເຫດຜົນທີ່ຂ້າພະເຈົ້າຈຶ່ງມີຫຼາຍໆທາງເລືອກໃນການຖາມຄໍາຖາມ ຫຼືລາຍງານຄວາມກັງວົນໃຈ. ຂ້າພະເຈົ້າສາມາດ:

1. **ໂອ້ລົມກັບຜູ້ຈັດການຂອງຂ້າພະເຈົ້າ.** ລາວ ຫຼື ນາງພ້ອມສະເໜີທີ່ຈະໂອ້ລົມຄໍາຖາມ ຫຼືຄວາມກັງວົນໃຈຂອງຂ້າພະເຈົ້າ.

2. **ໃຊ້ ນະໂຍບາຍ "ເປີດກວ້າງ" ຂອງພວກເຮົາ.** ຂ້າພະເຈົ້າຄວນຮູ້ສຶກສະບາຍໃຈໃນການເຂົ້າຫາສະມາຊິກຄະນະຜູ້ບໍລິຫານໃດໜຶ່ງ ຫຼືຜູ້ຕາງໜ້າຝ່າຍຊັບພະຍາກອນມະນຸດຂອງຂ້າພະເຈົ້າ ເພື່ອແຈ້ງບອກຄວາມກັງວົນໃຈຂອງຂ້າພະເຈົ້າຢ່າງເປັນຄວາມລັບ.

3. ຕິດຕໍ່ຫາສາຍດ່ວນເລື່ອງຈັນຍາບັນ. ຖ້າທ່ານຮູ້ສຶກບໍ່ສະບາຍໃຈໃນການລາຍງານຄວາມກັງວົນໃຈແບບພາຍໃນ, ການບໍລິການນີ້ໃຫ້ທາງເລືອກແກ່ຂ້າພະເຈົ້າໃນການລາຍງານແບບບໍ່ເປີດເຜີຍຊື່.
ຂ້າພະເຈົ້າ
ສາມາດໂທຫາສາຍດ່ວນເລື່ອງຈັນຍາບັນ ເພື່ອລາຍງານຄວາມກັງວົນໃຈຂອງຂ້າພະເຈົ້າ. ການບໍລິການເຫຼົ່ານີ້ມີໃຫ້ບໍລິການເປັນພາສາທ້ອງຖິ່ນຂອງຂ້າພະເຈົ້າ ແລະ ໃຫ້ບໍລິການ 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ ໂດຍບໍລິສັດເອກະລາດ.

4. ໃຊ້ການລາຍງານເທິງເວັບ. ຖ້າຂ້າພະເຈົ້າຮູ້ສຶກບໍ່ສະບາຍໃຈໃນການລາຍງານຄວາມກັງວົນໃຈໂດຍກົງຫາຜູ້ຈັດການຂອງຂ້າພະເຈົ້າ ຫຼືສະມາຊິກທີມງານຊັບພະຍາກອນມະນຸດໃດໜຶ່ງ, ຂ້າພະເຈົ້າສາມາດເຂົ້າຫາສາຍດ່ວນເລື່ອງຈັນຍາບັນຜ່ານເຄື່ອງມືອອນລາຍທາງເວັບທີ່ປອດໄພ. ເວັບໄຊມີທີ່ຢູ່ຕໍ່ໄປນີ້ - www.ethics.celestica.com. ທາງເລືອກນີ້ແມ່ນມີໃຫ້ບໍລິການເປັນພາສາທ້ອງຖິ່ນຂອງຂ້າພະເຈົ້າ, 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ ແລະ ໃຫ້ບໍລິການໂດຍບໍລິສັດເອກະລາດ.



## ການລາຍງານທີ່ມີປະສິດທິຜົນ

Celestica ດຳເນີນການຢ່າງຈິງຈັງຕໍ່ກັບທຸກການລາຍງານເລື່ອງການປະພຶດຜິດທີ່ເປັນໄປໄດ້ ແລະ ຈະສືບສວນແບບປິດລັບ ເຮັດການຕັດສິນວ່າມີການລະເມີດນະໂຍບາຍ BCG ຫຼືກົດໝາຍແທ້ບໍ, ແລະ ດຳເນີນການແກ້ໄຂຢ່າງເໝາະສົມ. ຖ້າຂ້າພະເຈົ້າມີສ່ວນພົວພັນໃນການສືບສວນການລະເມີດ BCG, ຂ້າພະເຈົ້າຖືກຄາດຫວັງໃຫ້ການຮ່ວມມືຢ່າງເຕັມສ່ວນ ແລະ ຕອບທຸກຄຳຖາມຢ່າງຄົບຖ້ວນ ແລະ ຕາມຄວາມເປັນຈິງ.

ເມື່ອຂ້າພະເຈົ້າພົບເຫັນເຫດການ ຫຼືພຶດຕິກຳທີ່ລະເມີດນະໂຍບາຍ BCG, ຂ້າພະເຈົ້າລາຍງານຂໍ້ເທັດຈິງທີ່ກ່ຽວຂ້ອງຢ່າງຖືກຕ້ອງ ເຊິ່ງລວມມີ:

- ລາຍລະອຽດຂອງການປະພຶດຜິດທີ່ຖືກກ່າວຫາ
- ຊື່ຂອງພະນັກງານທີ່ມີສ່ວນພົວພັນ ແລະ ຖືກຜົນກະທົບ
- ວັນທີ ແລະ ສະຖານທີ່ທີ່ເກີດເຫດການ
- ທຸກເອກະສານສະໜັບສະໜູນ (ອີເມວ, ບັນທຶກ, ລາຍງານ)

## ການບໍ່ແກ້ແຄ້ນ

Celestica ໃຫ້ຄວາມສຳຄັນຕໍ່ກັບການຊ່ວຍເຫຼືອຂອງພະນັກງານຜູ້ທີ່ແຈ້ງຄວາມກັງວົນ ແລະ ການລະເມີດນະໂຍບາຍ BCG, ກົດໝາຍ ຫຼືກົດລະບຽບທີ່ເປັນໄປໄດ້. ຂ້າພະເຈົ້າເຂົ້າໃຈວ່າ Celestica ຫ້າມທຸກການຂົ່ມຂູ່, ການແກ້ແຄ້ນ ຫຼືການຕອບໂຕ້ທຸກປະເພດຕໍ່ກັບຜູ້ທີ່ລາຍງານການລະເມີດກົດໝາຍ , ນະໂຍບາຍ BCG ຫຼືນະໂຍບາຍອື່ນຂອງພວກເຮົາທີ່ເກີດຂຶ້ນຈິງ ຫຼືສົງໃສວ່າເກີດຂຶ້ນ ດ້ວຍຄວາມບໍລິສຸດໃຈ, ຫຼືຜູ້ທີ່ໃຫ້ການຮ່ວມມື ຫຼືຊ່ວຍເຫຼືອໃນການສືບສວນທີ່ກ່ຽວຂ້ອງກັບການລະ ເມີດທີ່ຖືກລາຍງານ. ຂ້າພະເຈົ້າຮູ້ວ່າ Celestica ມີສິດປະຕິບັດວິໄນຕໍ່ກັບພະນັກງານຜູ້ທີ່ເຈດຕະນາໃຫ້ຂໍ້ມູນທີ່ບໍ່ເປັນຈິງ ຫຼືເຮັດການກ່າວຫາທີ່ບໍ່ເປັນຈິງ. ຖ້າຂ້າພະເຈົ້າເຂົ້າຮ່ວມໃນການປະພຶດທີ່ຖືກຫ້າມ, ຂ້າພະເຈົ້າຮູ້ວ່າຂ້າພະເຈົ້າໄດ້ຮັບການຊຸກຍູ້ໃຫ້ລາຍງານດ້ວຍຕົນເອງ ແລະ Celestica ຈະພິຈາລະນາ ສິ່ງນີ້ໃນການເຮັດການຕັດສິນໃຈກ່ຽວກັບການປະຕິບັດໂທດທາງວິໄນ.

## ຄໍາແນະນໍາການໂທຫາສາຍດ່ວນເລື່ອງຈັນຍາບັນ

ໃນເວລາທີ່ທ່ານໂທ, ທ່ານບໍ່ຈໍາເປັນຕ້ອງບອກຊື່ຂອງທ່ານ. ຜູ້ຊ່ຽວຊານດ້ານການສໍາພາດມືອາຊີບຈະບັນທຶກບັນຫາກັງວົນໃຈຂອງທ່ານ ແລະ ສົ່ງຕໍ່ຂໍ້ມູນຫາ Celestica ເພື່ອຕິດຕາມສືບສວນ. ທ່ານອາດຈະຕິດຕໍ່ຫາສາຍດ່ວນນີ້ໄດ້ ໂດຍການເບິ່ງທີ່ຕັ້ງ ແລະ ໝາຍເລກໂທລະສັບໃນຕາຕະລາງລຸ່ມນີ້.

| ທີ່ຕັ້ງ | ໝາຍເລກໂທລະສັບ |
|---|---|
| ຈີນ | 400-1204-132 |
| ຮ່ອງກົງ | 800-964214 |
| ອຽກລັງ | 1-800-903-377 |
| ຍີ່ປຸ່ນ | 0066-33-11-2505<br>00531-121520 |
| ເກົາຫຼີໃຕ້ | 00798-1-1-003-8571 |
| ປະເທດລາວ | www.ethics.celestica.com |
| ມາເລເຊຍ | 1-800-80-8641 |
| ແມັກຊິໂກ | 001-800-840-7907 |
| ໂຣມາເນຍ (Romtelecom) | 001-800-913-4998 |
| ສິງກະໂປ | 800-1204201 |
| ແອັດສະປາຍ | 900-991498 |
| ໄທ | 001-800-12-0665204 |
| ສະຫະລັດ ແລະ ການາດາ | 1-888-312-2689 |

### ສໍາລັບລາຍການໝາຍເລກຕິດຕໍ່ທີ່ອັບເດດຫຼ້າສຸດ, ໃຫ້ເຂົ້າເບິ່ງ www.ethics.celestica.com

ຖ້າທີ່ຕັ້ງບ່ອນທີ່ທ່ານອາໄສຢູ່ບໍ່ມີໃນລາຍຊື່ໃນຕາຕະລາງຢູ່ເບື້ອງຊ້າຍ, ກະລຸນາໃຊ້ຄໍາແນະນໍາຕໍ່ໄປນີ້ເພື່ອໂທຫາສາຍດ່ວນຈັນຍາບັນ:

1. ຈາກນອກປະເທດ ໃຫ້ຕິດຕໍ່ຫາສູນບໍລິການພາຍໃນຂອງທ່ານ.
2. ເພື່ອຂໍເກັບຄ່າໂທປາຍທາງ ເບື້ອງສະຫະລັດອາເມລິກາ ໂທ ຫາ 503-726-2457. ສາຍໂທລະສັບ ຕ້ອງໂທຈາກສູນບໍລິການພາຍໃນ ເພື່ອຫລີກລ້ຽງການເກັບຄ່າໂທສາກົນ ແລະ ຮັບປະກັນສາມາດສໍາພາດຊ່ຽວຊານເປັນພາສາລາວ.
3. ເມື່ອສູນບໍລິການຖາມຜູ້ຮັບສາຍ ໃຫ້ບອກຊື່ບໍລິສັດຂອງທ່ານ. ບໍ່ໃຫ້ແຈ້ງຊື່ຂອງທ່ານ.